# ມາດຕະຖານສະຖານທີ່ຈັດງານອາຊຽນ

## *ປະເພດ: ສະຖານທີ່ຈັດງານວາງສະແດງ*

# ຄູ່ມືການປະເມີນ ແລະ ຢັ້ງຢືນ

# ມາດຕະຖານສະຖານທີ່ຈັດງານອາຊຽນ

## *ປະເພດ: ສະຖານທີ່ຈັດງານວາງສະແດງ*

# ຄຳນຳ

ຈຸດປະສົງຂອງການແປມາດຕະຖານສະຖານທີ່ຈັດງານອາຊຽນ - ປະເພດສະຖານທີ່ຈັດງານວາງສະແດງສະບັບນີ້ ແມ່ນເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດມາດຕະຖານສະຖານທີ່ຈັດງານອາຊຽນ ໃນ ສປປ ລາວ ໃຫ້ມີປະສິດທິຜົນ ແລະ ປະສິດທິພາບສູງ ແລະ ແທດເໝາະກັບສະພາບຂອງບັນດາປະເທດສະມາຊິກອາຊຽນດັ່ງທີ່ໄດ້ລະບຸໄວ້ໃນແຜນຍຸດທະສາດການທ່ອງທ່ຽວອາຊຽນ 2016-2025. ອີກດ້ານໜຶ່ງກໍເພື່ອສົ່ງເສີມອຸດສາຫະກຳການຈັດງານ (MICE) ໃນ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດດຶງດູດນັກທ່ອງທ່ຽວພາຍໃນ, ພາກພື້ນ ແລະ ສາກົນເຂົ້າມາຈັດງານ ໃນ ສປປ ລາວ ໃຫ້ຫຼາຍຂຶ້ນ ຊຶ່ງຈະເປັນການປະກອບສ່ວນອັນສຳຄັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ມາດຕະຖານສະຖານທີ່ຈັດງານອາຊຽນ-ປະເພດສະຖານທີ່ຈັດງານວາງສະແດງ ປະກອບມີ 02 ປະເພດ ເຊັ່ນ: ສະຖານທີ່ຈັດງານວາງສະແດງທີ່ມີເນື້ອທີ່ຕໍ່າສຸດບໍ່ຫຼຸດ 5,000 ຕາແມັດ ແລະ 1,000 ຕາແມັດ. ຕົວຊີ້ວັດຫຼັກສໍາລັບມາດຕະຖານສະຖານທີ່ຈັດງານອາຊຽນປະເພດນີ້ປະກອບມີ 3 ອົງປະກອບເຊັ່ນ: 1) ດ້ານກາຍຍະພາບ; 2) ດ້ານເທັກໂນໂລຍີ ແລະ 3) ດ້ານການບໍລິການ. ບັນດາເງື່ອນໄຂເຫຼົ່ານີ້ເໜັ້ນໃສ່ມາດຕະຖານທາງກາຍຍະພາບ, ການບໍລິຫານຈັດການສະຖານທີ່ ແລະ ພະນັກງານທີ່ເຮັດວຽກຢູ່ພາຍໃນສະຖານທີ່ຈັດງານວາງສະແດງ ເພື່ອຕອບສະໜອງຕາມມາດຖານຂອງນັກເດີນທາງຈັດງານ ແລະ ສາມາດແຂ່ງຂັນໄດ້.

ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງມາຍັງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ໄລຍະ 2 ທີ່ໃຫ້ການສະໜັບສະໜູນດ້ານງົບປະມານເພື່ອແປ ແລະ ຈັດພິມມາດຕະຖານສະຖານທີ່ຈັດງານອາຊຽນ-ປະເພດສະຖານທີ່ຈັດງານວາງສະແດງສະບັບນີ້ຂຶ້ນມາ.

ຫວັງຢ່າງຍິ່ງວ່າມາດຕະຖານສະຖານທີ່ຈັດງານອາຊຽນປະເພດນີ້ຈະເປັນທິດຊີ້ນຳໃຫ້ແກ່ຜູ້ຈັດຕັ້ງປະຕິບັດຂັ້ນສູນກາງ ແລະ ທ້ອງຖິ່ນ, ທັງເປັນເອກະສານ ແລະ ແບບຢ່າງທີ່ດີໃຫ້ແກ່ອຸດສາຫະກຳການຈັດງານຢູ່ໃນ ສປປ ລາວ ໄດ້ຈັດຕັ້ງປະຕິບັດໃຫ້ໄດ້ຕາມມາດຕະຖານສະຖານທີ່ຈັດງານອາຊຽນ ແລະ ສາກົນ.

# ສາລະບານ


I. ມາດຕະຖານສະຖານທີ່ຈັດງານອາຊຽນ: *ປະເພດສະຖານທີ່ຈັດງານວາງສະແດງ* ........ 1

ຄຳນຳ ........ 2

ພາກສະເໜີ ........ 3

ຄຳສັບ ແລະ ຄຳນິຍາມ ........ 4

ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ ........ 6

II. ມາດຕະຖານສະຖານທີ່ຈັດງານອາຊຽນ: *ຄູ່ມືການປະເມີນຜົນ ແລະ ການຢັ້ງຢືນສຳລັບປະເພດສະຖານທີ່ຈັດງານວາງສະແດງ* ........ 22

ຄຳນຳ ........ 23

ພາກສະເໜີ ........ 24

ຂອບເຂດ ........ 25

ຄຳສັບ ແລະ ຄຳນິຍາມ ........ 26

ຄະນະກຳມະການຢັ້ງຢືນ ........ 27

ຂັ້ນຕອນການປະເມີນຜົນ ແລະ ກວດສອບມາດຕະຖານສະຖານທີ່ຈັດງານອາຊຽນ ........ 32

ໄລຍະເວລາການຢັ້ງຢືນ ........ 35

ຜົນປະໂຫຍດ ແລະ ສິດທິພິເສດ ........ 36

ເຄື່ອງໝາຍການຢັ້ງຢືນ ........ 37

ຄຳແນະນຳສຳລັບການປະເມີນສະຖານທີ່ຈັດງານອາຊຽນ ........ 38

ຂັ້ນຕອນການປະເມີນ ........ 61

ລະບຽບຂອງຄະນະກຳມະການປະເມີນຜົນຂັ້ນສູນກາງ ........ 63

ການຕໍ່ ແລະ ຖອນໃບຢັ້ງຢືນ ........ 64

ການອຸທອນ ແລະ ການຮ້ອງທຸກ ........ 65

ການຍົກເລີກການຢັ້ງຢືນ ........ 66

III. ເອກະສານຊ້ອຍທ້າຍ ........ 67

ເອກະສານຊ້ອນທ້າຍ 1: ໃບສະໝັກມາດຕະຖານສະຖານທີ່ຈັດງານອາຊຽນ ........ 68

ເອກະສານຊ້ອນທ້າຍ 2: ຈຳນວນຄະນະກຳມະການປະເມີນຜົນຂັ້ນສູນກາງທີ່ເຂົ້າຮ່ວມການປະເມີນຜົນມາດຕະຖານສະຖານທີ່ຈັດງານອາຊຽນ ........ 94

ເອກະສານຊ້ອນທ້າຍ 3: ແບບຟອມປະເມີນມາດຕະຖານສະຖານທີ່ຈັດງານອາຊຽນ ........ 96

ເອກະສານຊ້ອນທ້າຍ 4: ບົດລາຍງານການປະເມີນຜົນຕົວຈິງຂອງມາດຕະຖານສະຖານທີ່ຈັດງານອາຊຽນ ແລະ ການປັບປຸງ/ປ້ອງກັນ ........ 121

ເອກະສານຊ້ອນທ້າຍ 5: ບົດລາຍງານການປະເມີນຜົນມາດຕະຖານສະຖານທີ່ຈັດງານອາຊຽນ ........ 125

# I. ມາດຕະຖານສະຖານທີ່ຈັດງານອາຊຽນ: *ປະເພດສະຖານທີ່ຈັດງານວາງສະແດງ*

# ບົດທີ 1

## ຄຳນຳ

ໄມສ໌ (MICE – Meeting, Incentive, Convention and Exhbition) ຫມາຍເຖິງທຸລະກິດກ່ຽວກັບກັບການຈັດກອງປະຊຸມ, ການທ່ອງທ່ຽວຈາກການໄດ້ຮັບລາງວັນ, ກອງປະຊຸມຂະຫນາດໃຫຍ່ ແລະ ງານວາງສະແດງ. ເປັນຂະແໜງການໜຶ່ງທີ່ມີການຂະຫຍາຍຕົວໄວໃນບັນດາປະເທດສະມາຊິກອາຊຽນ. ວິໄສທັດໃນແຜນຍຸດທະສາດການທ່ອງທ່ຽວອາຊຽນປີ 2016 – 2025 ໄດ້ກຳນົດໄວ້ວ່າ:

*ພາຍໃນປີ 2025, ອາຊຽນຈະກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ມີຄຸນນະພາບ, ສະໜອງປະສົບການອາຊຽນທີ່ມີຄວາມເປັນເອກະລັກ ແລະ ມີຄວາມຫຼາກຫລາຍ ແລະ ຈະເນັ້ນໃສ່ການພັດທະນາການທ່ອງທ່ຽວແບບມີຄວາມຮັບຜິດຊອບ, ມີຄວາມຍືນຍົງ, ມີສ່ວນຮ່ວມ ແລະ ການພັດທະນາການທ່ອງທ່ຽວແບບສົມດຸນ ເພື່ອເປັນການປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາເສດຖະກິດ - ສັງຄົມ ແລະ ຊີວິດການເປັນຢູ່ຂອງຂອງປະຊາຊົນອາຊຽນ.*

ຜົນກະທົບຈາກການຈັດງານ ຄື: ກໍ່ໃຫ້ເກີດມີຈຳນວນນັກທ່ອງທ່ຽວ ຫລື ການໃຊ້ຈ່າຍຂອງນັກທ່ອງທ່ຽວເຫລົ່ານີ້ຫຼາຍຂຶ້ນ ຢູ່ໃນບັນດາປະເທດສະມາຊິກອາຊຽນ. ນັກທ່ອງທ່ຽວເຫລົ່ານີ້ຖືວ່າເປັນນັກທ່ອງທ່ຽວທີ່ໃຊ້ຈ່າຍເງິນຫລາຍຊຶ່ງໃຊ້ຈ່າຍກ່ອນ ແລະ ຫລັງກິດຈະກຳການຈັດງານ. ໂດຍສະເລ່ຍແລ້ວ, ເຂົາເຈົ້າພັກແຮມຢູ່ຕາມຈຸດໝາຍປາຍທາງຕ່າງໆ ຫຼາຍກ່ວານັກທ່ອງທ່ຽວປະເພດອື່ນໆ. ດັ່ງນັ້ນ, ນັກທ່ອງທ່ຽວຈາກໄມ'ສ ໄດ້ປະກອບສ່ວນອັນສຳຄັນໃຫ້ແກ່ການຂະຫຍາຍຕົວຂອງການທ່ອງທ່ຽວ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ ແລະ ຍັງສ້າງລາຍຮັບໃຫ້ແກ່ປະເທດຊາດຕື່ມອີກ.

ການນຳສະເໜີມາດຕະຖານສະຖານທີ່ຈັດງານອາຊຽນ ຈະຊ່ວຍໃຫ້ບັນດາປະເທດສະມາຊິກອາຊຽນມີປື້ມຄູ່ມືທີ່ດີເພື່ອເຮັດໃຫ້ຜະລິດຕະພັນຂອງຕົນສາມາດແຂ່ງຂັນໄດ້ ແລະ ສາມາດຮ່ວມມືກັນ ເພື່ອສະໜອງສະຖານທີ່ຈັດງານທີ່ມີຄຸນະພາບໃຫ້ແກ່ນັກທ່ອງທ່ຽວ ແລະ ເຮັດໃຫ້ອາຊຽນກາຍເປັນພາກພື້ນການຈັດງານທີ່ດີ ແລະ ສາມາດແຂ່ງຂັນກັນໄດ້.

# ບົດທີ 2

## ພາກສະເໜີ

ສະຖານທີ່ຈັດງານ (MICE Venue) ແມ່ນໜຶ່ງໃນບັນດາປັດໄຈທີ່ສຳຄັນສຳລັບຈຸດໝາຍປາຍທາງທີ່ຈະຖືກຄັດເລືອກເຂົ້າຮ່ວມເຮັດກິດຈະກຳດ້ານການຈັດງານ. ບັນດາ 10 ປະເທດສະມາຊິກອາຊຽນ ປະກອບມີ: ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ ໄດ້ຮັບຮອງເອົາ ມາດຕະຖານສະຖານທີ່ຈັດງານອາຊຽນດັ່ງກ່າວນີ້ຮຽບຮ້ອຍແລ້ວ ຊຶ່ງໄດ້ກາຍເປັນເອກະສານອ້າງອີງເພື່ອພັດທະນາ ແລະ ເສີມຂະຫຍາຍຄວາມອາດສາມາດ ແລະ ການແຂ່ງຂັນຂອງຜູ້ປະກອບການ ແລະ ເຈົ້າຂອງສະຖານທີ່ຈັດງານ ໃນດ້ານການບໍລິການໃຫ້ແກ່ຜູ້ຈັດງານ ແລະ ນັກທ່ອງທ່ຽວ ແບບມືອາຊີບ.

ມາດຕະຖານສະຖານທີ່ຈັດງານອາຊຽນ (ASEAN MICE Venue Standard) ໝາຍເຖິງຫ້ອງປະຊຸມ (Meeting room), ສະຖານທີ່ຈັດງານວາງສະແດງ (Exhbition venue) ແລະ ງານນິເທດສະການ (Event venue). ປື້ມຄູ່ມືສະບັບນີ້, ຈະເວົ້າສະເພາະປະເພດສະຖານທີ່ຈັດງານວາງສະແດງ ຊຶ່ງປະກອບມີ 2 ປະເພດ ເຊັ່ນ: ສະຖານທີ່ຈັດງານວາງສະແດງທີ່ມີເນື້ອທີ່ຕໍ່າສຸດບໍ່ຫຼຸດ 5,000 ຕາແມັດ ແລະ 1,000 ຕາແມັດ. ເງື່ອນໄຂຫຼັກສຳລັບມາດຕະຖານສະຖານທີ່ຈັດງານອາຊຽນປະເພດນີ້ປະກອບມີ: 1) ດ້ານກາຍຍະພາບ; 2) ດ້ານເຕັກໂນໂລຊີ ແລະ 3) ດ້ານການບໍລິການ. ບັນດາຕົວຊີ້ວັດເຫຼົ່ານີ້ເນັ້ນໃສ່ມາດຕະຖານທາງກາຍຍະພາບ, ການບໍລິຫານຈັດການສະຖານທີ່ ແລະ ພະນັກງານທີ່ເຮັດວຽກຢູ່ພາຍໃນສະຖານທີ່ວາງສະແດງ ເພື່ອຕອບສະໜອງຕາມມາດຖານຂອງນັກທ່ອງທ່ຽວໃນຮູບແບບໄມສ໌.

# ບົດທີ 3

## ຄໍາສັບ ແລະ ຄໍານິຍາມ

**ຄໍາສັບ ແລະ ຄໍານິຍາມ**
ຄໍາສັບ ແລະ ຄໍານິຍາມ ທີ່ໃຊ້ຢູ່ໃນມາດຕະຖານນີ້ມີຄືດັ່ງນີ້:

**3.1 ໄມສ໌ (MICE)**

ໄມສ໌ (MICE) ໝາຍເຖິງ ທຸລະກິດກ່ຽວກັບການຈັດກອງປະຊຸມ (Meeting), ການທ່ອງທ່ຽວຈາກການໄດ້ຮັບລາງວັນ (Incentive), ກອງປະຊຸມຂະໜາດໃຫຍ່ (Convention), ງານວາງສະແດງ (Exhibition) ແລະ ທຸລະກິດຮັບຈັດງານນິເທດສະຖານຕ່າງໆ (Event). ນອກຈາກນີ້, ຍັງໝາຍເຖິງຜູ້ສະໜອງດ້ານການບໍລິການ ແລະ ລູກຄ້າໃນທຸລະກິດທີ່ກ່ຽວກັບໄມສ໌ອີກດ້ວຍ

**3.2 ປະເພດສະຖານທີ່ຈັດງານ**

ປະເພດສະຖານທີ່ຈັດງານໝາຍເຖິງຫ້ອງປະຊຸມ, ສະຖານທີ່ຈັດງານວາງສະແດງ ແລະ ສະຖານທີ່ຈັດງານຕ່າງໆ. ຖ້າເວົ້າອີກແບບຫນຶ່ງແມ່ນ ພື້ນທີ່ທາງກາຍຍະພາບ ທີ່ອອກແບບມາສະເພາະກິດຈະກໍາຈັດງານຕ່າງໆ ທີ່ມີຈຸດປະສົງໃນການຈັດກອງປະຊຸມ, ງານວາງສະແດງ ແລະ ງານນິເທດສະການຕ່າງໆ.

**3.3 ສະຖານທີ່ຈັດງານວາງສະແດງ**

ສະຖານທີ່ໃດໜຶ່ງທີ່ປະກອບມີສອງພື້ນທີ່ ເຊັ່ນ:

(1) ຫ້ອງວາງສະແດງ; ແລະ

(2) ພື້ນທີ່ກະກຽມຈັດງານ

**3.4 ຫ້ອງວາງສະແດງ**

ພື້ນທີ່ຈັດງານວາງສະແດງໃນຮົ່ມທີ່ມີຝາຖາວອນທຸກດ້ານ ແລະ ມີພື້ນທີ່ເໝາະສົມ. ຫ້ອງວ່າງສະແດງປະກອບມີ 2 ປະເພດ ດັ່ງລຸ່ມນີ້:

| ປະເພດ | ຄຸນລັກສະນະພື້ນຖານ | | |
|---|---|---|---|
| | ເນື້ອທີ່ຕໍ່າສຸດ (ຕາແມັດ) | ຄວາມສູງຕໍ່າສຸດ* (ແມັດ) | ສາມາດຮັບນໍ້າໜັກຕໍ່າສຸດ (ໂຕນ/ຕາແມັດ) |
| 1 | 5,000 | 8-12 | 1.00-2.00 |
| 2 | 1,000 | 5-7 | 0.35-0.50 |

ໝາຍເຫດ* ຄວາມສູງແມ່ນວັດແທັກຈາກພື້ນຫາຈຸດຕໍ່າສຸດຂອງໂຄງສ້າງຫຼັງຄາຢູ່ໃນຫ້ອງວາງສະແດງ.

**3.5 ປ້າຍ**

ອຸປະກອນທີ່ອອກແບບມາເພື່ອສື່ຄວາມໝາຍ ເຊັ່ນ: ຊື່ຫ້ອງປະຊຸມ, ທິດທາງ ແລະ ປ້າຍສຸກເສີນ.

**3.6 ບ່ອນຈອດລົດສຳລັບຜູ້ມາຮ່ວມງານ**

ພື້ນທີ່ທີ່ບໍລິການຈອດລົດສຳລັບລູກຄ້າ.

**3.7 ບ່ອນຮັບ-ສົ່ງ**

ບ່ອນຈອດລົດຊົ່ວຄາວສຳລັບສົ່ງ ແລະ ຮັບລູກຄ້າ.

**3.8 ບ່ອນຈອດລົດສຳລັບລົດບັນທຸກສິນຄ້າ**

ສະຖານທີ່ສຳລັບຈອດລົດບັນທຸກສິນຄ້າ.

**3.9 ບ່ອນບັນຈຸ ຫຼື ຂົນເຄື່ອງ**

ສະຖານທີ່ສຳລັບລົດບັນທຸກສິນຄ້າເພື່ອບັນຈຸ/ຂົນເຄື່ອງເຂົ້າໃສ່ຫ້ອງວາງສະແດງ.

**3.10 ບ່ອນຕ້ອນຮັບ ແລະ ລົງທະບຽນ**

ສະຖານທີ່ທີ່ຈັດໄວ້ສະເພາະຕ້ອນຮັບ ແລະ ລົງທະບຽນລູກຄ້າ.

**3.11 ຫ້ອງສຳລັບຜູ້ຈັດງານວາງສະແດງ**

ຫ້ອງຖາວອນທີ່ຈັດໄວ້ໃຫ້ແກ່ຜູ້ຈັດງານວາງສະແດງ.

**3.12 ຫ້ອງປະຊຸມ**

ຫ້ອງຖາວອນສຳລັບຈັດກອງປະຊຸມ, ສຳມະນາ ແລະ ກິດຈະກຳຕ່າງໆທີ່ເປັນກຸ່ມນ້ອຍ ທີ່ແຍກອອກຈາກຫ້ອງວາງສະແດງ.

**3.13 ຫ້ອງຖະແຫຼງຂ່າວ**

ຫ້ອງສຳລັບສື່ທີ່ຕັ້ງຢູ່ພາຍໃນອາຄານຈັດງານວາງສະແດງ.

**3.14 ຫ້ອງປະຖົມພະຍາບານເບື້ອງຕົ້ນ**

ຫ້ອງທີ່ຈັດໄວ້ສະເພາະສຳລັບການປະຖົມພະຍາບານເບື້ອງຕົ້ນໃນຊ່ວງຈັດງານວາງສະແດງ (ການຕິດຕັ້ງຮ້ານງານວາງສະແດງ, ຊ່ວງເວລາຈັດງານວາງສະແດງ ແລະ ການຮື້/ມ້າງຮ້ານວາງສະແດງ).

**3.15 ສູນບໍລິການທຸລະກິດ**

ສະຖານທີ່ທີ່ຈັດໄວ້ເພື່ອສະໜອງການບໍລິການສຳລັບຜູ້ຈັດງານວາງສະແດງ ແລະ ລູກຄ້າ ເຊັ່ນ: ການບໍລິການພິມເອກະສານ, ຮັບແຟັກ ແລະ ກ໊ອບປີ້/ສຳເນົາເອກະສານ.

**3.16 ພື້ນທີ່ກະກຽມການຈັດງານ**

ພື້ນທີ່ທີ່ຕິດກັບຫ້ອງວາງສະແດງສຳລັບຈັດກິດຈະກຳຫຼາຍຢ່າງ.

# ບົດທີ 4

## ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ

ຕາຕະລາງຂ້າງລຸ່ມນີ້ໄດ້ລະບຸປະເພດຫ້ອງວາງສະແດງ ແລະ ເງື່ອນໄຂຕ່າງໆ. ໃນກໍລະນີສະຖານທີ່ຈັດງານວາງສະແດງຕ່າງໆ ສະໝັກເພື່ອຂໍການຢັ້ງຢືນຮັບຮອງ, ເຂົາເຈົ້າຕ້ອງເລືອກເອົາຫ້ອງວາງສະແດງປະເພດດຽວເທົ່ານັ້ນ. ໝາຍຄວາມວ່າສະຖານທີ່ຈັດງານວາງສະແດງຕ້ອງແມ່ນ:

- ຫ້ອງວາງສະແດງປະເພດ 1 ປະກອບມີ 55 ຕົວຊີ້ວັດ.
- ຫ້ອງວາງສະແດງປະເພດ 2 ປະກອບມີ 54 ຕົວຊີ້ວັດ.

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ 1** | **ປະເພດ 2** |
| **ດ້ານກາຍະພາບຂອງຫ້ອງວາງສະແດງ ແລະ ບ່ອນຈັດງານ** | | | |
| **P01 – ສະພາບ ແລະ ຄວາມສະອາດຂອງຫ້ອງວາງສະແດງ**<br>• ບໍ່ມີສິ່ງກີດຂວາງຢູ່ເທິງເພດານ ຫຼື ໂຄງສ້າງຫຼັງຄາໃນລະດັບຄວາມສູງ 8-12 ແມັດ (ສໍາລັບຫ້ອງວາງສະແດງປະເພດ 1) ແລະ 5-7 ແມັດ (ສໍາລັບຫ້ອງວາງສະແດງປະເພດ 2).<br>• ພື້ນ, ຝາ ແລະ ເພດານຂອງຫ້ອງວາງສະແດງສະອາດດີ, ບໍ່ມີຂີ້ຝຸ່ນ, ບໍ່ມີສິ່ງເສດເຫຼືອ ແລະ ບໍ່ມີຮອຍເປິເປື້ອນ<br>• ຫ້ອງວາງສະແດງບໍ່ມີກິ່ນເໝັນອັບ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ສອງຂໍ້<br>1 ໄດ້ໜຶ່ງຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **P02 – ເຄື່ອງຍົກນໍ້າໜັກ**<br>• ມີການລະບຸນໍ້າໜັກຈໍາກັດຢູ່ແຕ່ຈຸດທີ່ຕ້ອງການຍົກ.<br>• ມີແຜນຜັງສະແດງຕໍາແໜ່ງການຍົກ.<br>• ເອກະສານກວດກາ ຫຼື ສ້ອມແປງປະຈໍາປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ສອງຂໍ້<br>1 ໄດ້ໜຶ່ງຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **ຂອບເຂດຫ້ອງວາງສະແດງ** | | | |
| **P03 – ພື້ນທີ່ກະກຽມຈັດງານ**<br>• ສະອາດ ແລະ ເປັນລະບຽບດີ.<br>• ມີດອກໄຟ.<br>• ມີຮູປັກສຽບພຽງພໍ.<br>• ມີເຄື່ອງປັບອາກາດ ແລະ ລະບົບລະບາຍອາກາດພຽງພໍ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| | | | |
| **P04 – ບ່ອນຕ້ອນຮັບ ແລະ ລົງທະບຽນ**<br>• ສະອາດ ແລະ ເປັນລະບຽບດີ.<br>• ຕັ້ງຢູ່ດ້ານໜ້າທາງເຂົ້າຫ້ອງວາງສະແດງ.<br>• ມີຮູປັກສຽບພຽງພໍ.<br>• ມີປ້າຍທີ່ແນມເຫັນໄດ້ງ່າຍ ແລະ ໝັ້ນຄົງ.<br>• ມີລະບົບເຄື່ອງຂະຫຍາຍສຽງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | ✓ | ✓ |
| **P05 – ຫ້ອງປະຊຸມ**<br>**ຫ້ອງວາງສະແດງປະເພດ 1**<br>• ມີຫ້ອງຖາວອນທີ່ສະອາດ ແລະ ເປັນລະບຽບດີ.<br>• ຕັ້ງຢູ່ໃກ້ກັບຫ້ອງວາງສະແດງ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີໂຕະ ແລະ ຕັ່ງພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | ✓ | |
| **ຫ້ອງວາງສະແດງປະເພດ 2**<br>• ມີພື້ນທີ່ທີ່ສາມາດຕິດຕັ້ງຈັດງານໄດ້ທີ່ສະອາດ ແລະ ເປັນລະບຽບດີ.<br>• ຕັ້ງຢູ່ໃກ້ກັບຫ້ອງວາງສະແດງ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີໂຕະ ແລະ ຕັ່ງພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | | ✓ |
| **P06 – ຫ້ອງຕ້ອນຮັບແຂກ VIP**<br>**ຫ້ອງວາງສະແດງປະເພດ 1**<br>• ມີຫ້ອງຖາວອນທີ່ສະອາດ ແລະ ເປັນລະບຽບດີ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີຫ້ອງນ້ຳສ່ວນຕົວ<br>• ມີໂຕະ ແລະ ຕັ່ງ ຫຼື ຕັ່ງຊາໂລງ (ໂຊຟາ) ພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | ✓ | |
| **ຫ້ອງວາງສະແດງປະເພດ 2** | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້ | | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| • ມີພື້ນທີ່ທີ່ສາມາດຕິດຕັ້ງຈັດງານໄດ້ທີ່ສະອາດ ແລະ ເປັນລະບຽບດີ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີໂຕະ ແລະ ຕັ່ງ ຫຼື ຕັ່ງຊາໂລງ (ໂຊຟາ) ພຽງພໍ. | 1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | | |
| **P07 – ຫ້ອງຖະແຫຼງຂ່າວ**<br>**ຫ້ອງວາງສະແດງປະເພດ 1**<br>• ມີຫ້ອງຖາວອນທີ່ສະອາດ ແລະ ເປັນລະບຽບດີ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີຫ້ອງນ້ຳສ່ວນຕົວ<br>• ມີໂຕະ ແລະ ຕັ່ງ ຫຼື ບ່ອນນັ່ງເຮັດວຽກ.<br>• ມີອຸປະກອນ ຫຼື ເຄື່ອງໃຊ້ຫ້ອງການພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | ✓ | |
| **ຫ້ອງວາງສະແດງປະເພດ 2**<br>• ມີພື້ນທີ່ທີ່ສາມາດຕິດຕັ້ງຈັດງານໄດ້ທີ່ສະອາດ ແລະ ເປັນລະບຽບດີ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີຫ້ອງນ້ຳສ່ວນຕົວ<br>• ມີໂຕະ ແລະ ຕັ່ງ ຫຼື ບ່ອນນັ່ງເຮັດວຽກ.<br>• ມີອຸປະກອນ ຫຼື ເຄື່ອງໃຊ້ຫ້ອງການພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | | ✓ |
| **P08 – ຫ້ອງໄຫວ້** | 3 ມີຫ້ອງໄຫວ້ຖາວອນ ຫລື ສາມາດສ້າງຂຶ້ນໃໝ່ໄດ້, ແຍກຫ້ອງຍິງ/ຊາຍ ແລະ ມີສິ່ງອຳນວຍຄວາມສະດວກທີ່ເໝາະສົມ.<br>2 ມີຫ້ອງທີ່ສາມາດສ້າງເປັນຫ້ອງໄຫວ້, ແຍກຫ້ອງຍິງ/ຊາຍ ແລະ ມີສິ່ງອຳນວຍຄວາມສະດວກຈຳນວນໜຶ່ງ<br>1 ມີຫ້ອງທີ່ສາມາດສ້າງເປັນຫ້ອງໄຫວ້ ແລະ ແຍກຫ້ອງຍິງ/ຊາຍ.<br>0 ພື້ນທີ່ດັ່ງກ່າວບໍ່ສາມາດສ້າງ ເປັນຫ້ອງໄວ້ໄດ້. | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ປະເພດ | |
| | | 1 | 2 |
| **P09 – ສິ່ງອຳນວຍຄວາມສະດວກສຳລັບຄົນພິການ** | 3 ມີສິ່ງອຳນວຍຄວາມສະດວກສຳລັບຄົນພິການຢ່າງພຽງພໍ ແລະ ມີພະນັກງານໄດ້ຮັບການຝຶກອົບຮົມເພື່ອບໍລິການຄົນພິການທີ່ເຂົ້າຮ່ວມງານ.<br>2 ມີສິ່ງອຳນວຍຄວາມສະດວກສຳລັບຄົນພິການຢ່າງພຽງພໍ.<br>1 ມີສິ່ງອຳນວຍຄວາມສະດວກສຳລັບຄົນພິການຈຳນວນຈຳກັດ.<br>0 ບໍ່ມີສິ່ງອຳນວຍຄວາມສະດວກສຳລັບຄົນພິການ. | ✓ | ✓ |
| **P10 – ຫ້ອງອາຫານ**<br>• ມີພື້ນທີ່ທີ່ສາມາດຈັດເປັນຫ້ອງອາຫານເພື່ອບໍລິການອາຫານໃຫ້ແກ່ຜູ້ເຂົ້າຮ່ວມງານ.<br>• ສະອາດ ແລະ ເປັນລະບຽບດີ<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີລະບົບລະບາຍອາກາດພຽງພໍ.<br>• ມີເນື້ອທີ່ພຽງພໍສຳລັບການກະກຽມອາຫານ ພ້ອມອຸປະກອນປຸງແຕ່ງອາຫານຂັ້ນພື້ນຖານ.<br>• ມີບັນຊີລາຍຊື່ຜູ້ສະໜອງອາຫານໃນກໍລະນີມີຄວາມຕ້ອງການ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 5 ຂໍ້<br>1 ໄດ້ 4 ຂໍ້<br>0 ໄດ້ໜ້ອຍກວ່າ 4 ຂໍ້ | ✓ | ✓ |
| **ເຂດສາທາລະນະ** | | | |
| **P11 – ການເຂົ້າເຖິງຫ້ອງວາງສະແດງ**<br>• ມີທາງເຂົ້າທີ່ເຊື່ອມຕໍ່ກັບຫ້ອງວາງສະແດງເພື່ອເຮັດໃຫ້ມີຄວາມສະດວກໃນການຈະລາຈອນ<br>• ມີທາງເຂົ້າ-ອອກຫ້ອງວາງສະແດງໄປຫາຖະໜົນຫຼວງຫຼາຍທາງ.<br>• ມີທາງເຂົ້າຫາສະຖານທີ່ວາງສະແດງຈາກສະຖານີຂົນສົ່ງສາທາລະນະ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **P12 – ປ້າຍຊີ້ບອກ**<br>• ມີປ້າຍຊີ້ບອກຕິດຕັ້ງຖາວອນ.<br>• ມີປ້າຍຊີ້ບອກທີ່ຕິດຕັ້ງຢູ່ບ່ອນທີ່ເຫັນໄດ້ງ່າຍ ແລະ ເປັນລະບຽບດີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| • ມີປ້າຍດີຈີຕອລ (Digital).<br>• ມີປ້າຍເປັນພາສາອັງກິດ | | | |
| **P13 – ປ້າຍຊີ້ບອກທາງເຂົ້າຫຼັກ**<br>• ຕິດຕັ້ງຢູ່ບ່ອນທີ່ເບິ່ງເຫັນໄດ້ງ່າຍ.<br>• ມີແສງສະຫວ່າງພຽງພໍ.<br>• ໝັ້ນຄົງ ແລະ ຖາວອນ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |
| **P14 – ເຄື່ອງໃຊ້ໃນຫ້ອງນ້ຳ**<br>ມາດຕະຖານຫ້ອງນ້ຳສາທາລະນະອາຊຽນ<br>• ມີເຄື່ອງໃຊ້ ແລະ ອຸປະກອນຕ່າງໆ<br>• ຫ້ອງນ້ຳແຕ່ລະຫ້ອງມີເນື້ອທີ່ເໝາະສົມ.<br>• ມີເຄື່ອງໃຊ້ພຽງພໍສຳລັບຄົນພິການ ແລະ ຜູ້ສູງອາຍ.<br>• ມີຕູ້ໃສ່ເຄື່ອງພຽງພໍ ສຳລັບທ່ານຍິງ ແລະ ທ່ານຊາຍ.<br>• ມີເຄື່ອງໃຊ້ພຽງພໍ ເຊັ່ນ: ເຈ້ຍທິດຊູ, ສະບູ ແລະ ອື່ນໆ.<br>• ມີຫ້ອງປ່ຽນຜ້າອ້ອມ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 2-3 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **P15 – ບ່ອນສູບຢາ** | 3 ມີຫ້ອງສູບຢາ ຕາມກົດໝາຍທີ່ກ່ຽວຂ້ອງ ແລະ ຫ້ອງສູບຢາຕ້ອງໃຊ້ງານໄດ້.<br>2 ມີຫ້ອງສູບຢາ ຕາມກົດໝາຍທີ່ກ່ຽວຂ້ອງ.<br>1 ມີບ່ອນສູບຢາ ແຕ່ບໍ່ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ.<br>0 ບໍ່ມີບ່ອນໃຫ້ສູບຢາ. | ✓ | ✓ |
| **P16 – ບ່ອນຮັບ-ສົ່ງ**<br>• ຕັ້ງຢູ່ໃກ້ກັບທາງເຂົ້າສະຖານທີ່ວາງສະແດງ.<br>• ມີຫຼັງຄາມຸງຢ່າງດີ.<br>• ມີປ້າຍຊີ້ບອກທີ່ເບິ່ງເຫັນໄດ້ຈະແຈ້ງດີ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **P17 – ບ່ອນຈອດລົດສຳລັບຜູ້ເຂົ້າຮ່ວມງານ**<br>• ມີບ່ອນຈອດລົດສຳລັບລົດປະເພດຕ່າງໆ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້ | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| • ມີບ່ອນຈອດລົດສໍາລັບຄົນພິການ.<br>• ມີປ້າຍ ແລະ ເຄື່ອງໝາຍຈະລາຈອນທີ່ເບິ່ງເຫັນໄດ້ງ່າຍ.<br>• ມີກ້ອງວົງຈອນປິດ (CCTV) ຫຼື ພະນັກງານຍາມຢູ່ບ່ອນຈອດລົດ.<br>• ໃນກໍລະນີບໍ່ມີບ່ອນຈອດລົດ ຫຼື ມີບ່ອນຈອດລົດບໍ່ພຽງພໍ, ສາມາດໃຊ້ບ່ອນຈອດລົດແຫ່ງອື່ນທີ່ຈັດໄວ້ສະເພາະ ແລະ ມີມາດຕະຖານຄວາມປອດໄພຄ້າຍຄືກັນ. | 1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | | |
| **P18 – ການຈັດການການຈະລາຈອນໃນຊ່ວງຈັດງານວາງສະແດງ**<br>• ມີແຜນການຈັດການການຈະລາຈອນທີ່ເປັນລະບົບ.<br>• ມີພະນັກງານຮັບຜິດຊອບຈັດການການຈະລາຈອນ.<br>• ມີເສັ້ນທາງສະເພາະຜູ້ເຂົ້າຮ່ວມງານ ແລະ ລົດບັນທຸກສິນຄ້າ.<br>• ມີແຈ້ງການກ່ຽວກັບລະບຽບການຈະລາຈອນສໍາລັບງານວາງສະແດງໃຫ້ແກ່ປະຊາຊົນອ້ອມຂ້າງຮັບຊາບ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |
| **P19 – ລະບົບນໍ້າ ແລະ ສຸຂະອະນາໄມ**<br>• ມີຈຸດແຈກນໍ້າໃນສະພາບດີ.<br>• ມີລະບົບລະບາຍນໍ້າເສຍທີ່ດີ ແລະ ໄດ້ຕາມມາດຕະຖານພາຍໃນປະເທດ.<br>• ມີເອກະສານການກວດກາ ຫຼື ສ້ອມແປງປະຈໍາປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **P20 – ລະບົບເກັບນໍ້າ**<br>• ລະບົບເກັບນໍ້າຢູ່ໃນສະພາບທີ່ດີ.<br>• ລະບົບເກັບນໍ້າຕ້ອງສອດຄ່ອງກັບກົດໝາຍພາຍໃນປະເທດ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈໍາປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | |
| **ອຸປະກອນປ້ອງກັນຄວາມປອດໄພ/ຄວາມສະຫງົບ/ເຫດສຸກເສີນ** | | | |
| **P21 – ອຸປະກອນປ້ອງກັນຄວາມປອດໄພ**<br>• ມີກ້ອງວົງຈອນປິດ ແລະ ຫ້ອງຄວບຄຸມພ້ອມພະນັກງານປະຈໍາຕະຫຼອດເວລາ.<br>• ສະຖານທີ່ວາງສະແດງມີກົດລະບຽບການເປີດກ້ອງວົງຈອນປິດເພື່ອເບິ່ງຄືນ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 5-6 ຂໍ້<br>1 ໄດ້ 3-4 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| • ມີອຸປະກອນຈັບຂວັນ ຫຼື ຄວາມຮ້ອນ.<br>• ມີເຄື່ອງສີດນ້ຳເວລາມີໄຟໄໝ້.<br>• ມີບັ້ງດັບເພີງ ຫຼື ສາຍດັບເພີງຕິດຕັ້ງຢ່າງເໝາະສົມ ແລະ ສະດວກແກ່ການນຳໃຊ້.<br>• ມີໄຟແຈ້ງເຕືອນທີ່ສາມາດເບິ່ງເຫັນໄດ້ດີ.<br>• ມີເອກະສານການກວດກາ ຫຼື ສ້ອມແປງປະຈຳປີ. | | | |
| **P22 – ເຫດສຸກເສີນ, ຄວາມປອດໄພ ແລະ ຄວາມສະງົບສຳລັບຫ້ອງວາງສະແດງ**<br>• ອຸປະກອນຮັບມືກັບເຫດສຸກເສີນ, ທາງໜີໄຟ ແລະ ທາງອົບພະຍົກຕ້ອງສອດຄ່ອງກັບກົດໝາຍພາຍໃນ.<br>• ມີປ້າຍທາງໜີໄຟຕິດຕັ້ງຖາວອນ ແລະ ຢູ່ໃນສະພາບດີ.<br>• ມີແຜ່ນປ້າຍຊີ້ບອກທີ່ເຫັນໄດ້ດີພ້ອມມີຄຳແນະນຳກ່ຽວກັບການດັບໄຟ ແລະ ໜີໄຟ.<br>• ມີພະນັກງານຍາມພຽງພໍຢູ່ຕາມທາງເຂົ້າຫຼັກໄປຫາຫ້ອງວາງສະແດງ, ສະຖານທີ່ວາງສະແດງ ແລະ ພື້ນທີ່ກະກຽມຈັດງານ.<br>• ມີກ້ອງວົງຈອນປິດ ຫຼື ອຸປະກອນປ້ອງກັນຄວາມປອດໄພຕ່າງໆ ຈຳນວນພຽງພໍຢູ່ໃນພື້ນທີ່ສຳຄັນຂອງຫ້ອງວາງສະແດງ, ສະຖານທີ່ວາງສະແດງ ແລະ ພື້ນທີ່ກະກຽມຈັດງານ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ.<br>• ມີຫຼັກຖານການຝຶກຊ້ອມດັບໄຟປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 6 ຂໍ້<br>1 ໄດ້ 5 ຂໍ້<br>0 ໄດ້ໜ້ອຍກວ່າ 5 ຂໍ້ | ✓ | ✓ |
| **P23 – ຫ້ອງປະຖົມພະຍາບານ ແລະ ພະນັກງານປະຖົມພະຍາບານ** | 3 ມີພະຍາບານ/ພະນັກງານປະຖົມພະຍາບານປະຈຳ ຫລື ຊົ່ວຄາວໃນຊ່ວງຈັດງານ ແລະ ມີຫ້ອງປະຖົມພະຍາບານ.<br><br>2 ມີພະຍາບານ/ພະນັກງານປະຖົມພະຍາບານປະຈຳ ຫລື ຊົ່ວຄາວໃນຊ່ວງຈັດງານ ແລະ ມີເຄື່ອງປະຖົມພະຍາບານຈຳນວນໜຶ່ງ. | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| | 1 ບໍ່ມີພະຍາບານ/ພະນັກງານປະຖົມພະຍາບານປະຈຳ ຫລື ຊົ່ວຄາວໃນຊ່ວງຈັດງານ. ມີພຽງແຕ່ເຄື່ອງປະຖົມພະຍາບານຈຳນວນໜຶ່ງ.<br><br>0 ບໍ່ມີພະຍາບານ/ພະນັກງານປະຖົມພະຍາບານປະຈຳ ຫລື ຊົ່ວຄາວໃນຊ່ວງຈັດງານ ແລະ/ຫລື ບໍ່ມີເຄື່ອງປະຖົມພະຍາບານ/ບໍ່ມີຫ້ອງປະຖົມພະຍາບານ. | | |
| **P24 – ການຈັດການກັບຝູງຊົນ ແລະ ຂັ້ນຕອນການອົບພະຍົກຄົນ**<br>• ມີແຜນຜັງຂອງສະຖານທີ່ຈັດງານວາງສະແດງ.<br>• ມີແຜນຜັງຂອງຫ້ອງວາງສະແດງ.<br>• ມີແຜນອົບພະຍົກຄົນໃນກໍລະນີມີເຫດສຸກເສີນ.<br>• ມີຫຼັກຖານການຝຶກອົບຮົມໃຫ້ແກ່ພະນັກງານກ່ຽວກັບການຈັດການກັບຝູງຊົນ ແລະ ຂັ້ນຕອນການອົບພະຍົກຄົນ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |
| **P25 – ລະບຽບການປະກັນໄພ** | 3 ມີລະບຽບການປະກັນໄພທີ່ລະບຸຢູ່ໃນສັນຍາ.<br>0 ບໍ່ມີລະບຽບການປະກັນໄພ. | ✓ | ✓ |
| **P26 – ການສ້ອມແປງ**<br>• ມີພະແນກສ້ອມແປງສະເພາະ<br>• ມີແຜນການສ້ອມແປງ<br>• ມີຫຼັກຖານການກວດກາ, ການລາຍງານ ແລະ ການບຳລຸງຮັກສາສິ່ງອຳນວຍຄວາມສະດວກ ແລະ ອຸປະກອນຂອງສະຖານທີ່ຈັດງານວາງສະແດງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **ການເຂົ້າເຖິງຫ້ອງວາງສະແດງຂອງຜູ້ຈັດງານ** | | | |
| **P27 – ບ່ອນຈອດລົດບັນທຸກສິນຄ້າ**<br>• ມີລະບົບຈັດແຖວສຳລັບຈອດລົດບັນທຸກສິນຄ້າ.<br>• ມີລະບົບບັນຈຸ ແລະ ຂົນເຄື່ອງ.<br>• ມີພະນັກງານປະສານງານ ຫຼື ຊ່ວຍວຽກ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| **P28 – ບ່ອນຂົນຈຸເຄື່ອງ**<br>(ໃນກໍລະນີຫ້ອງວາງສະແດງຕັ້ງຢູ່ຊັ້ນທີ່ບໍ່ມີບ່ອນຈອດລົດ, ຕ້ອງມີລິບຂົນເຄື່ອງ).<br><br>**ຫ້ອງວາງສະແດງປະເພດ 1**<br>• ຢ່າງໜ້ອຍຕ້ອງມີປະຕູສຳລັບຂົນເຄື່ອງໜຶ່ງປະຕູຕໍ່ຫ້ອງວາງສະແດງ. ຖ້າຫ້ອງວາງສະແດງສາມາດແບ່ງອອກເປັນຫຼາຍຫ້ອງ, ຈຳນວນປະຕູສຳລັບຂົນເຄື່ອງກໍ່ຕ້ອງມີຈຳນວນເທົ່າກັນກັບຈຳນວນຫ້ອງວາງສະແດງ.<br>• ປະຕູສຳລັບຂົນເຄື່ອງຕ້ອງຢູ່ໃນສະພາບດີ ແລະ ປອດໄພ.<br>• ມີລະບົບແສງສະຫວ່າງ ແລະ ລະບາຍອາກາດ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | |
| **ຫ້ອງວາງສະແດງປະເພດ 2**<br>• ຢ່າງໜ້ອຍຕ້ອງມີປະຕູສຳລັບຂົນເຄື່ອງໜຶ່ງປະຕູຕໍ່ຫ້ອງວາງສະແດງ. ຖ້າຫ້ອງວາງສະແດງສາມາດແບ່ງອອກເປັນຫຼາຍຫ້ອງ, ຈຳນວນປະຕູສຳລັບຂົນເຄື່ອງກໍ່ຕ້ອງມີຈຳນວນເທົ່າກັນກັບຈຳນວນຫ້ອງວາງສະແດງ.<br>• ປະຕູ ແລະ ລິບສຳລັບຂົນເຄື່ອງຕ້ອງຢູ່ໃນສະພາບດີ ແລະ ປອດໄພ.<br>• ມີທັງລະບົບແສງສະຫວ່າງ ແລະ ລະບາຍອາກາດ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | | ✓ |
| **P29 – ຫ້ອງສຳລັບຜູ້ຈັດງານ**<br>• ສະອາດ ແລະ ເປັນລະບຽບດີ.<br>• ຕັ້ງຢູ່ໃກ້ຫ້ອງວາງສະແດງ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຣູປັກສຽບ.<br>• ມີໂຕະ ແລະ ຕັ່ງພຽງພໍ.<br>• ມີອິນເຕີເນັດຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | ✓ | ✓ |
| **P30 –ໄລຍະເວລາກະກຽມງານສຳລັບຜູ້ຈັດງານ** | 3 ມີລະບຽບການກະກຽມງານ ແລະ ແຈ້ງລະບຽບນັ້ນໃຫ້ຜູ້ຈັດງານຮັບຊາບເປັນຢ່າງດີ.<br>0 ບໍ່ມີລະບຽບ ແລະ ຜູ້ຈັດງານກໍ່ບໍ່ສາມາດເຂົ້າໄປກະກຽມກ່ອນເປີດງານ | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ປະເພດ | |
| | | 1 | 2 |

| ດ້ານເຕັກໂນໂລຊີ (Technology) | | | |
|---|---|---|---|
| ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ປະເພດ | |
| | | 1 | 2 |
| **ລະບົບໄຟ, ແສງສະຫວ່າງ ແລະ ເຄື່ອງປັບອາກາດ** | | | |
| **T01 – ລະບົບໄຟ**<br>• ມີຫ້ອງຄວບຄຸມລະບົບໄຟ.<br>• ມີແຜນຜັງສະແດງທີ່ຕັ້ງຂອງລະບົບໄຟ.<br>• ມີພະນັກງານປະຕິບັດໜ້າທີ່ໃນຊ່ວງຈັດງານ.<br>• ມີອຸປະກອນປ້ອງກັນຄວາມປອດໄພຈາກໄຟຟ້າຕາມກົດໝາຍພາຍໃນ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | ✓ | ✓ |
| **T02 – ລະບົບແສງສະຫວ່າງ**<br>• ລະບົບແສງສະຫວ່າງຂອງຫ້ອງວາງສະແດງມີຄວາມເໝາະສົມ ແລະ ສາມາດຄວບຄຸມໄດ້.<br>• ເຄື່ອງມື ແລະ ອຸປະກອນໄຟຟ້າຕ້ອງໄດ້ມາດຕະຖານພາຍໃນ.<br>• ມີຫ້ອງຄວບຄຸມລະບົບແສງສະຫວ່າງ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |
| **T03 – ລະບົບເຄື່ອງປັບອາກາດຢູ່ໃນຫ້ອງວາງສະແດງ**<br>• ເຄື່ອງປັບອາກາດຕ້ອງມີຈຳນວນພຽງພໍກັບຂະໜາດຂອງຫ້ອງວາງສະແດງ.<br>• ການໄຫຼວຽນຂອງອາກາດ ແລະ ລະດັບອຸນຫະພູມສາມາດປັບໄດ້.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **T04 – ລະບົບລະບາຍອາກາດຢູ່ໃນຫ້ອງວາງສະແດງ**<br>• ມີລະບົບລະບາຍອາກາດທີ່ເໝາະສົມຕາມກົດໝາຍພາຍໃນປະເທດ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| • ມີລະບົບລະບາຍອາກາດທີ່ບໍ່ໄດ້ສ້າງຜົນກະທົບຕໍ່ຊຸມຊົນໃກ້ຄຽງ.<br>• ມີລະບົບຜະລິດອາກາດປະສົມກັບອາກາດຂ້າງນອກ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | | | |
| **T05 – ລະບົບໄຟ ແລະ ແສງສະຫວ່າງຢູ່ພື້ນທີ່ກະກຽມຈັດງານ**<br>• ລະບົບແສງສະຫວ່າງຂອງພື້ນທີ່ກະກຽມຈັດງານມີຄວາມເໝາະສົມ ແລະ ສາມາດຄວບຄຸມໄດ້.<br>• ເຄື່ອງມື ແລະ ອຸປະກອນໄຟຟ້າຕ້ອງໄດ້ຕາມມາດຕະຖານພາຍໃນປະເທດ.<br>• ມີຫ້ອງຄວບຄຸມລະບົບໄຟ ແລະ ແສງສະຫວ່າງ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |
| **T06 – ເຄື່ອງປັ່ນໄຟຟ້າສຳຮອງ**<br>• ສາມາດດຳເນີນງານໄດ້ທັນທີຫຼັງຈາກໄຟດັບ (ພາຍໃນ 20 ວິນາທີ)<br>• ສາມາດປັ່ນໄຟໄດ້ຢ່າງຕໍ່ເນື່ອງຕໍ່າສຸດບໍ່ຫຼຸດ 2 ຊົ່ວໂມງ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **ການບໍລິການອື່ນໆ** | | | |
| **T07 – ການບໍລິການດ້ານການປະສານງານ ແລະ ເອກະສານ**<br>• ມີການບໍລິການກັອບປີ້ເອກະສານ<br>• ມີການບໍລິການສະແກນເອກະສານ<br>• ມີການບໍລິການສົ່ງແຟັກ<br>• ມີສິ່ງອຳນວຍຄວາມສະດວກດ້ານອິນເຕີເນັດຄວາມໄວສູງຢູ່ໃນສະຖານທີ່ຈັດງານວາງສະແດງ.<br>• ມີສັນຍານວິທະຍຸສື່ສານທົ່ວສະຖານທີ່ຈັດງານ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | ✓ | ✓ |
| **T08 – ສູນບໍລິການດ້ານທຸລະກິດ**<br>• ສະອາດ ແລະ ເປັນລະບຽບ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູບັກສຽບ.<br>• ມີໂຕະ, ຕັ່ງ ຫຼື ບ່ອນເຮັດວຽກພຽງພໍ.<br>• ມີອິນເຕີເນັດຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |
| **T09 – ການນຳໃຊ້ລະບົບບໍລິຫານລູກຄ້າ** | 3 ໄດ້ຄົບທຸກຂໍ້ | ✓ | ✓ |

| ດ້ານກາຍຍະພາບ (Physical) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| • ລະບົບຖານຂໍ້ມູນລູກຄ້າ<br>• ລະບົບຮັບການຈອງ<br>• ລະບົບຮັບເອົາຄໍາຈົ່ມວ່າ | 2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | | |
| **T10 – ລະບົບເຄື່ອງຂະຫຍາຍສຽງ**<br>• ສຽງດັງ ແລະ ແຈ້ງດີ<br>• ສຽງກະຈາຍໄປທົ່ວຫ້ອງວາງສະແດງ.<br>• ສຽງກະຈາຍເປັນພາສາທ້ອງຖິ່ນ ແລະ ພາສາອັງກິດ.<br>• ສາມາດອອກອາກາດໄດ້ຫຼາຍບ່ອນ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | ✓ | ✓ |
| **T11 – ເວັບໄຊຂອງສະຖານທີ່ຈັດງານ**<br>• ມີເວັບໄຊທາງການຂອງສະຖານທີ່ຈັດງານວາງສະແດງ<br>• ມີຫຼັກຖານການປັບປຸງເວັບໄຊເປັນປະຈໍາ.<br>• ເວັບໄຊມີຂໍ້ມູນທີ່ດີ ແລະ ກະທັດຮັດສໍາລັບສະຖານທີ່ຈັດງານວາງສະແດງ, ຫ້ອງວາງສະແດງ ແລະ ໃຊ້ງ່າຍ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |

| ດ້ານການບໍລິການ (Service) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| **ການປະສານງານ ແລະ ຂອດການບໍລິການ** | | | |
| **S01 – ການບໍລິການຮັບຈອງລ່ວງໜ້າ**<br>• ມີຂໍ້ມູນທາງອອນລາຍກ່ຽວກັບປະເພດ ແລະ ແຜນຜັງຂອງຫ້ອງວາງສະແດງທີ່ເຂົ້າໃຈງ່າຍ.<br>• ມີຂໍ້ມູນທາງອອນລາຍກ່ຽວກັບຫ້ອງວາງສະແດງທີ່ເຂົ້າໃຈງ່າຍ.<br>• ມີພະນັກງານຂາຍຄອຍຕອບຄໍາຖາມລູກຄ້າ.<br>• ພະນັກງານມີຄວາມຮູ້ ແລະ ສາມາດໃຫ້ຄໍາແນະນໍາກ່ຽວກັບແຜນຜັງ ແລະ ແພັກເກັດຫ້ອງວາງສະແດງໄດ້ຕາມຄວາມຕ້ອງການຂອງລູກຄ້າ.<br>• ມີວິທີຊໍາລະເງິນຫລາຍວິທີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | ✓ | ✓ |
| **S02 – ການບໍລິການສໍາລັບຜູ້ຈັດງານ** | 3 ມີພະນັກງານຊ່ວຍວຽກຜູ້ຈັດງານ ແລະ ຮັບມືກັບບັນຫາຕ່າງໆ ຄືກັບ ຈຸດບໍລິການປະຕູດຽວໃນກໍລະນີເກີດເຫດສຸກເສີນ.<br>2 ຜູ້ຈັດງານສາມາດຕິດຕໍ່ 2-3 ຊ່ອງທາງໃນເວລາເກີດເຫດສຸກເສີນ.<br>1 ຜູ້ຈັດງານສາມາດຕິດຕໍ່ຫາຫລາຍພາກສ່ວນໃນເວລາເກີດເຫດສຸກເສີນ.<br>0 ຜູ້ຈັດງານບໍ່ຮູ້ຈະຕິດຕໍ່ຫາໃຜໃນເວລາເກີດເຫດສຸກເສີນ. | ✓ | ✓ |
| **S03 – ການປະເມີນການຈົ່ມວ່າ ແລະ ການບໍລິການຂອງຜູ້ຊື້ ແລະ/ຫຼື ຜູ້ຈັດງານ**<br>• ມີຊ່ອງທາງຮັບເອົາການຈົ່ມວ່າ ແລະ ຄໍາຄິດເຫັນຈາກແຂກທີ່ເໝາະສົມ.<br>• ມີລະບົບຮັບເອົາການຈົ່ມວ່າ ແລະ ຄໍາຄິດເຫັນຈາກແຂກ.<br>• ມີລະບົບສ້າງແຮງຈູງໃຈ/ໃຫ້ລາງວັນແກ່ພະນັກງານເພື່ອໃຫ້ໄດ້ມາດຕະຖານການບໍລິການທີ່ດີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |

| ດ້ານການບໍລິການ (Service) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| **S04 – ການປະສານງານ ແລະ ການຮ່ວມມືກັບພາກສ່ວນພາຍນອກ (ເຊັ່ນ: ໂຮງໝໍ, ສະຖານີຕຳຫຼວດ ແລະ ສະຖານີດັບເພີງ)**<br>• ມີສູນປະສານງານ ແລະ ມີພະນັກງານບໍລິການຕະຫຼອດເວລາໃນຊ່ວງຈັດງານ.<br>• ມີບັນຊີລາຍຊື່ຜູ້ປະສານງານຕ່າງໆ ເຊັ່ນ: ເບີໂທຂອງພາກສ່ວນທີ່ກ່ຽວຂ້ອງຈາກພາຍນອກ.<br>• ມີລະບົບການປະສານງານກັບພາກສ່ວນພາຍນອກຕ່າງໆ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **ພະນັກງານ** | | | |
| **S05 – ບຸກຄະລິກກະພາບຂອງພະນັກງານ**<br>• ໃສ່ເຄື່ອງແບບທີ່ເໝາະສົມ.<br>• ພະນັກງານນຸ່ງຖືເປັນລະບຽບ ແລະ ສວຍງາມດີ.<br>• ພະນັກງານເປັນມິດທີ່ດີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **S06 – ຄວາມຮູ້ທົ່ວໄປ ແລະ ຄວາມເຂົ້າໃຈຂອງພະນັກງານສະຖານທີ່ຈັດງານ**<br>• ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບລາຍລະອຽດຂອງວຽກ ແລະ ໜ້າທີ່.<br>• ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບອຸດສາຫະກຳ ແລະ ກິດຈະກຳງານວາງສະແດງ.<br>• ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບສະຖານທີ່ ແລະ ການຈັດງານ.<br>• ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຄວາມເປັນມາ ແລະ ຄວາມຕ້ອງການຂອງຜູ້ເຂົ້າຮ່ວມງານ ແລະ ຜູ້ຈັດງານ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກ່ວາ 2 ຂໍ້ | ✓ | ✓ |
| **S07 – ທັກສະດ້ານພາສາຕ່າງປະເທດຂອງພະນັກງານ**<br>• ພະນັກງານສ່ວນຫລາຍສາມາດສື່ສານພາສາອັງກິດໄດ້<br>• ພະນັກງານຈຳນວນໜຶ່ງສາມາດສື່ສານພາສາທີ່ສາມໄດ້<br>• ມີການຝຶກອົບຮົມດ້ານພາສາໃຫ້ແກ່ພະນັກງານປະຈຳ ແລະ ຊົ່ວຄາວ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |

| ດ້ານການບໍລິການ (Service) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| **S08 – ການປະຕິບັດວຽກງານດ້ານຄຸນນະພາບຂອງການບໍລິການຂອງພະນັກງານ**<br>• ມີລະບົບການຮັບເອົາພະນັກງານທັງພະນັກງານປະຈຳ ແລະ ຊົ່ວຄາວ.<br>• ມີການແນະນຳ ແລະ ການຝຶກອົບຮົມໃຫ້ແກ່ພະນັກງານປະຈຳ ແລະ ຊົ່ວຄາວຕາມກົດໝາຍພາຍໃນປະເທດ.<br>• ມີລະບົບກວດສອບການຮັບເອົາພະນັກງານຊົ່ວຄາວໃໝ່.<br>• ມີການຄຸ້ມຄອງການປະຕິບັດວຽກງານຂອງພະນັກງານປະຈຳ ແລະ ຊົ່ວຄາວຢ່າງເໝາະສົມ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກ່ວາ 2 ຂໍ້ | ✓ | ✓ |
| **S09 – ການຊົດເຊີຍ, ຜົນປະໂຫຍດ ແລະ ສະຫວັດດີການສຳລັບພະນັກງານ**<br>• ການຊົດເຊີຍ, ຜົນປະໂຫຍດ ແລະ ສະຫວັດດີການຕາມກົດໝາຍແຮງງານພາຍໃນປະເທດ.<br>• ພະນັກງານໄດ້ຮັບການກວດສຸຂະພາບປະຈຳປີ.<br>• ອີງຕາມກົດໝາຍແຮງງານພາຍໃນແມ່ນມີການສົ່ງເສີມໃຫ້ຈ້າງແຮງງານທ້ອງຖິ່ນໃຫ້ມີວຽກເຮັດ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **S10 – ລະບຽບດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບ**<br>• ລະບຽບດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບໄດ້ລະບຸເປັນລາຍລັກອັກສອນຢ່າງດີ.<br>• ມີແຜນຈັດຕັ້ງປະຕິບັດງານລະບຽບດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບ.<br>• ມີການເຜີຍແຜ່ລະບຽບດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບຢູ່ທັງພາຍໃນ ແລະ ພາຍນອກອົງການຈັດຕັ້ງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **S11 – ວິທີຈັດຕັ້ງປະຕິບັດດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບ** | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້ | ✓ | ✓ |

| ດ້ານການບໍລິການ (Service) | | | |
|---|---|---|---|
| **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ປະເພດ** | |
| | | **1** | **2** |
| • ປຶດບັນທຶກການປະຕິບັດດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບ.<br>• ປຶດລາຍງານການປະຕິບັດວຽກງານ.<br>• ຕິດຕາມປຶດລາຍງານການປະຕິບັດວຽກງານຢ່າງໜ້ອຍບໍ່ໃຫ້ຫຼຸດໜຶ່ງຄັ້ງຕໍ່ປີ. | 1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | | |
| **ການປົກປັກຮັກສາສິ່ງແວດລ້ອມ ແລະ ຊຸມຊົນ** | | | |
| **S12 – ລະບຽບດ້ານສິ່ງແວດລ້ອມ (ເຊັ່ນ: ການປະຢັດພະລັງງານ, ພະລັງງານທາງເລືອກ ແລະ ການຈັດການຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ)**<br>• ມີລະບຽບດ້ານສິ່ງແວດລ້ອມຂຽນເປັນລາຍລັກອັກສອນ.<br>• ມີແຜນຈັດຕັ້ງປະຕິບັດລະບຽບດ້ານສິ່ງແວດລ້ອມ.<br>• ມີການເຜີຍແຜ່ລະບຽບດ້ານສິ່ງແວດລ້ອມຢູ່ທັງພາຍໃນ ແລະ ພາຍນອກອົງການ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **S13 – ການຈັດຕັ້ງປະຕິບັດດ້ານສິ່ງແວດລ້ອມ**<br>• ປຶດບັນທຶກການຈັດຕັ້ງປະຕິບັດດ້ານສິ່ງແວດລ້ອມ<br>• ປຶດລາຍງານການປະຕິບັດວຽກງານ<br>• ຕິດຕາມປຶດລາຍງານການປະຕິບັດວຽກຢ່າງໜ້ອຍບໍ່ໃຫ້ຫຼຸດນຶ່ງຄັ້ງຕໍ່ປີ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | ✓ | ✓ |
| **S14 – ການໃຫ້ຄວາມສຳຄັນແກ່ຊຸມຊົນອ້ອມຂ້າງ** | 3 ມີກິດຈະກຳ ແລະ ນະໂຍບາຍສົ່ງເສີມຊຸມຊົນອ້ອມຂ້າງ.<br>2 ມີກິດຈະກຳ ຫລື ນະໂຍບາຍສົ່ງເສີມຊຸມຊົນອ້ອມຂ້າງ.<br>1 ມີກິດຈະກຳ ຫລື ນະໂຍບາຍສົ່ງເສີມຊຸມຊົນອ້ອມຂ້າງໜ້ອຍທີ່ສຸດ.<br>0 ບໍ່ມີກິດຈະກຳ ຫລື ນະໂຍບາຍສົ່ງເສີມຊຸມຊົນອ້ອມຂ້າງ. | ✓ | ✓ |

---------------------------------------------------

# II. ມາດຕະຖານສະຖານທີ່ຈັດງານອາຊຽນ: *ຄູ່ມືການປະເມີນຜົນ ແລະ ການຢັ້ງຢືນສໍາລັບປະເພດສະຖານທີ່ຈັດງານວາງສະແດງ*

# ບົດທີ 5

## ຄຳນຳ

ນີ້ແມ່ນປື້ມຄູ່ມືການປະເມີນຜົນ ແລະ ການຢັ້ງຢືນມາດຕະຖານສະຖານທີ່ຈັດງານອາຊຽນ (AMVS) ຊຶ່ງປະກອບມີຫລັກການການປະເມີນຜົນ, ບົດແນະນຳ ແລະ ຂັ້ນຕອນການຢັ້ງຢືນ ເພື່ອໃຫ້ສະຖານທີ່ຈັດງານນັ້ນສາມາດໄດ້ຮັບລາງວັນມາດຕະຖານສະຖານທີ່ຈັດງານອາຊຽນ.

ບັນດາຕົວຊີ້ວັດ ແລະ ມາດຖານທີ່ບັນຈຸຢູ່ໃນຄູ່ມືສະບັບນີ້ແມ່ນມາດຕະຖານສະຖານທີ່ຈັດງານອາຊຽນ ທີ່ໄດ້ຮັບຮອງເອົາຈາກບັນດາປະເທດສະມາຊິກອາຊຽນ. ການປະເມີນ ແລະ ການຢັ້ງຢືນ ຈະຊ່ວຍເຮັດໃຫ້ສະຖານທີ່ຈັດງານຢູ່ພາຍໃນອາຊຽນ ໄດ້ຮັບການປັບປຸງ ແລະ ພັດທະນາດ້ານຂີດຄວາມສາມາດຂອງຕົນ ເພື່ອເຮັດໃຫ້ບັນດາທຸກລະກິດຈັດງານຕ່າງໆ ໄດ້ຮັບໂອກາດທີ່ດີ ແລະ ສ້າງພາກພື້ນດັ່ງກ່າວນີ້ໃຫ້ກາຍເປັນພາກພື້ນການຈັດງານທີ່ມີມາດຕະຖານເທົ່າທຽມກັນ ແລະ ສາມາດແຂ່ງຂັນກັນໄດ້.

# ບົດທີ 6

## ພາກສະເໜີ

ການສ້າງຕັ້ງມາດຕະຖານສະຖານທີ່ຈັດງານອາຊຽນ (AMVS) ແລະ ຄະນະກຳມະການຢັ້ງຢືນແມ່ນມີຄວາມຈຳເປັນຫລາຍເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດມາດຕະຖານສະຖານທີ່ຈັດງານອາຊຽນດັ່ງກ່າວນີ້ໃຫ້ປະສົບຜົນສຳເລັດ. ປື້ມຄູ່ມືສະບັບນີ້ປະກອບມີລາຍລະອຽດຂອງຂັ້ນຕອນການປະເມີນຜົນຢ່າງກະທັດຮັດ ແລະ ຈະແຈ້ງດີ, ພາກສ່ວນທີ່ຮັບຜິດຊອບດ້ານການບໍລິຫານ ແລະ ດຳເນີນການ ແລະ ຜົນປະໂຫຍດທີ່ສະຖານທີ່ຈັດງານຄາດວ່າຈະໄດ້ຮັບພາຍຫລັງທີ່ໄດ້ຮັບການຢັ້ງຢືນໄດ້ມາດຕະຖານສະຖານທີ່ຈັດງານອາຊຽນ. ແຕ່ຕົ້ນຈົນຈົບຂອງປື້ມຄູ່ມືສະບັບນີ້ແມ່ນຈະຊ່ວຍເຮັດໃຫ້ຜູ້ປະເມີນໄດ້ຄວາມຮູ້ ແລະ ທັກສະໃນການປະເມີນສະຖານທີ່ຈັດງານຢ່າງຊັດເຈນ ເຊັ່ນດຽວກັນກັບການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງມາດຕະຖານສະຖານທີ່ຈັດງານອາຊຽນ.

# ບົດທີ 7

## ຂອບເຂດ

ປຶ້ມຄູ່ມືສະບັບນີ້ປະກອບມີ:

- ໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດຂອງຄະນະກຳມະການຢັ້ງຢືນທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດມາດຕະຖານສະຖານທີ່ຈັດງານອາຊຽນ.
- ຄຳແນະນຳໃນການປະເມີນຜົນ ຊຶ່ງເປັນເອກະສານອ້າງອີງ ແລະ ຂັ້ນຕອນການຈັດຕັ້ງປະຕິບັດງານມາດຕະຖານໃນການປະເມີນມາດຕະຖານສະຖານທີ່ຈັດງານອາຊຽນ.

# ບົດທີ 8

## ຄໍາສັບ ແລະ ຄໍານິຍາມ

ເງື່ອນໄຂ ແລະ ນິຍາມໃນຄູ່ມືສະບັບນີ້ມີຄືດັ່ງນີ້:

**8.1 ປະເທດສະມາຊິກອາຊຽນ**

ປະເທດສະມາຊິກອາຊຽນ ໝາຍເຖິງ ບັນດາປະເທດສະມາຊິກຂອງສະມາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ ຊຶ່ງປະກອບມີ: ບຣູໄນ ດາຣູຊະລາມ, ກໍາປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ.

**8.2 ມາດຕະຖານສະຖານທີ່ຈັດງານອາຊຽນ**

ມາດຕະຖານສະຖານທີ່ຈັດງານອາຊຽນ ປະກອບມີ 3 ປະເພດ ຄື: (1) ຫ້ອງປະຊຸມ; (2) ສະຖານທີ່ຈັດງານວາງສະແດງ ແລະ (3) ສະຖານທີ່ຈັດງານນິເທດສະການ. ມາດຕະຖານສະຖານທີ່ຈັດງານອາຊຽນ (ປະເພດສະຖານທີ່ຈັດງານວາງສະແດງ) ປະກອບມີ 2 ປະເພດ ເຊັ່ນ: ປະເພດ 1 ແລະ ປະເພດ 2.

**8.3 ຄະນະກໍາມະການປະເມີນຜົນຂັ້ນສູນກາງ**

ຄະນະກໍາມະການປະເມີນຜົນຂັ້ນສູນກາງ ໝາຍເຖິງ ຄະນະກໍາມະການຢັ້ງຢືນທີ່ປະຕິບັດຕາມຄໍາແນະນໍາໃນການປະເມີນຜົນ ເຊັ່ນ: ກວດສອບ ແລະ ປະເມີນສະຖານທີ່ຈັດງານອາຊຽນ. ຄະນະກໍາມະການປະເມີນຜົນຂັ້ນສູນກາງ ໝາຍເຖິງ ຜູ້ປະເມີນຜົນ.

**8.4 ອົງການທ່ອງທ່ຽວພາກລັດ**

ພາກລັດວາງແຜນ ແລະ ຄຸ້ມຄອງວຽກງານການພັດທະນາ ແລະ ໂຄສະນາການທ່ອງທ່ຽວ ໃນລະດັບຊາດ ຫລື ທຽບເທົ່າ.

**8.5 ບົດແນະນໍາໃນການປະເມີນຜົນ**

ບົດແນະນໍາໃນການປະເມີນຜົນ ໝາຍເຖິງ ບັດໃຫ້ຄະແນນຂອງຄະນະກໍາມະການປະເມີນຜົນຂັ້ນສູນກາງ ທີ່ດໍາເນີນການກວດສອບ ແລະ ປະເມີນສະຖານທີ່ຈັດງານອາຊຽນ.

# ບົດທີ 9

## ຄະນະກຳມະການຢັ້ງຢືນ

ຄະນະກຳມະການຢັ້ງຢືນຈະອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດມາດຕະຖານສະຖານທີ່ຈັດງານອາຊຽນ ຢູ່ໃນແຕ່ລະປະເທດສະມາຊິກອາຊຽນ. ຄະນະກຳມະການຢັ້ງຢືນ ປະກອບມີ 3 ປະເພດ ຄື:

- ອົງການທ່ອງທ່ຽວພາກລັດ (ຂັ້ນສູນກາງ) ຫລື ທຽບເທົ່າ;
- ອົງການທ່ອງທ່ຽວພາກລັດ (ຂັ້ນແຂວງ ຫລື ທ້ອງຖິ່ນ) ຫລື ທຽບເທົ່າ;
- ອົງການ ຫລື ສະມາຄົມທີ່ບໍ່ສັງກັດລັດ ທີ່ຕິດພັນກັບທຸລະກິດຈັດງານ.

ຄວາມຮັບຜິດຊອບຂອງແຕ່ລະອົງການຈັດຕັ້ງຂອງຄະນະກຳມະການຢັ້ງຢືນ ດັ່ງທີ່ໄດ້ລະບຸໄວ້ໃນຕາຕະລາງ 9.1.

ຕາຕະລາງ 9.1: ຄວາມຮັບຜິດຊອບຂອງອົງການຈັດຕັ້ງຕ່າງໆ ຂອງຄະນະກຳມະການຢັ້ງຢືນ.

| ອົງການຈັດຕັ້ງ | ຄວາມຮັບຜິດຊອບ |
|---|---|
| **ອົງການທ່ອງທ່ຽວພາກລັດ (ຂັ້ນສູນກາງ) ຫລື ທຽບເທົ່າ** | ▪ ສ້າງຕັ້ງຄະນະກຳມະການປະເມີນຜົນມາດຕະຖານສະຖານທີ່ຈັດງານອາຊຽນຂັ້ນສູນກາງ<br>▪ ມີໜ້າທີ່ເປັນປະທານຄະນະກຳມະການປະເມີນຜົນຂັ້ນສູນກາງ ຊຶ່ງປະກອບມີການເປັນປະທານ ແລະ ມີສ່ວນຮ່ວມໃນການຄັດເລືອກການສະໝັກ, ກວດສອບ, ປະເມີນ, ກະກຽມບົດລາຍງານການປະເມີນຜົນ ແລະ ຜົນຂອງການປະເມີນຄັ້ງຫລ້າສຸດ. |
| **ອົງການທ່ອງທ່ຽວພາກລັດ (ຂັ້ນແຂວງ ຫລື ທ້ອງຖິ່ນ) ຫລື ທຽບເທົ່າ** | ▪ ມີໜ້າທີ່ເປັນສະມາຊິກຂອງຄະນະກຳມະການປະເມີນຜົນຂັ້ນສູນກາງ ຊຶ່ງມີສ່ວນຮ່ວມໃນການຄັດເລືອກການສະໝັກ, ກວດສອບ, ປະເມີນ, ກະກຽມບົດລາຍງານການປະເມີນຜົນ ແລະ ຜົນຂອງການປະເມີນຄັ້ງຫລ້າສຸດ. |
| **ອົງການ ຫື ສະມາຄົມທີ່ບໍ່ສັງກັດລັດ ທີ່ຕິດພັນກັບທຸລະກິດຈັດງານ** | ▪ ມີໜ້າທີ່ເປັນສະມາຊິກຂອງຄະນະກຳມະການປະເມີນຜົນຂັ້ນສູນກາງ ຊຶ່ງມີສ່ວນຮ່ວມໃນການຄັດເລືອກການສະໝັກ, ກວດສອບ, ປະເມີນ, ກະກຽມບົດລາຍງານການປະເມີນຜົນ ແລະ ຜົນຂອງການປະເມີນຄັ້ງຫລ້າສຸດ. |

ໃນນີ້, ບັນດາປະເທດສະມາຊິກອາຊຽນມີຄວາມຮັບຜິດຊອບໃນການອະນຸຍາດ, ຮັບຮອງບົດລາຍງານການປະເມີນຜົນ, ມອບໃບຢັ້ງຢືນ ແລະ ເຄື່ອງໝາຍ ໃຫ້ແກ່ສະຖານທີ່ຈັດງານທີ່ຜ່ານການປະເມີນຜົນ.

ໂຄງຮ່າງການຈັດຕັ້ງຂອງຄະນະກຳມະການຢັ້ງຢືນ ຫລື ຄະນະກຳມະການປະເມີນຜົນມາດຕະຖານສະຖານທີ່ຈັດງານອາຊຽນຂັ້ນສູນກາງ ດັ່ງທີ່ລະບຸໄວ້ຢູ່ໃນ (ຕາຕະລາງ 9.1). ຫລັງຈາກສຳເລັດການປະເມີນຜົນແລ້ວ, ຄະນະກຳມະການຢັ້ງຢືນ ຈະນຳເອົາຜົນການປະເມີນຜົນດັ່ງກ່າວໄປນຳສະເໜີຢູ່ກອງປະຊຸມຂອງປະເທດສະມາຊິກອາຊຽນ ເພື່ອໃຫ້ມີການຮັບຮອງເອົາ ຊຶ່ງລາຍລະອຽດໄດ້ລະບຸໄວ້ຢູ່ໃນ (ຕາຕະລາງ 9.2).




ຮູບພາບ 9.1: ໂຄງຮ່າງການຈັດຕັ້ງຂອງຄະນະກຳມະການປະເມີນຜົນມາດຕະຖານສະຖານທີ່ຈັດງານອາຊຽນຂັ້ນສູນກາງ ທີ່ສັງກັດຢູ່ໃນຄະນະກຳມະການຢັ້ງຢືນມາດຕະຖານສະຖານທີ່ຈັດງານອາຊຽນຂອງແຕ່ລະປະເທດສະມາຊິກອາຊຽນ.

ຕົວຢ່າງຂອງບັນດາອົງການຈັດຕັ້ງທີ່ລວມຢູ່ໃນຄະນະກຳມະການປະເມີນຜົນມາດຕະຖານສະຖານທີ່ຈັດງານອາຊຽນທີ່ສັງກັດຢູ່ໃນຄະນະກຳມະການຢັ້ງຢືນມາດຕະຖານສະຖານທີ່ຈັດງານອາຊຽນຂອງແຕ່ລະປະເທດສະມາຊິກ ຊຶ່ງລາຍລະອຽດໄດ້ລະບຸໄວ້ຢູ່ໃນຕາຕະລາງ 9.2. ເນື່ອງຈາກວ່າໂຄງຮ່າງການຈັດຕັ້ງຂອງແຕ່ລະປະເທດສະມາຊິກອາຊຽນ ມີຄວາມແຕກຕ່າງກັນ ແລະ ອົງການຈັດຕັ້ງທີ່ຮັບຜິດຊອບຢູ່ແຕ່ລະປະເທດກໍ່ອາດມີຄວາມແຕກຕ່າງກັນ.

ເຖິງແນວໃດກໍ່ຕາມ, ຄວາມສຳຄັນຂອງການຄັດເລືອກສະມາຊິກຂອງຄະນະກຳມະການປະເມີນຜົນຂັ້ນສູນກາງຕ້ອງບໍ່ມີຄວາມຄັດແຍ່ງກັນລະຫວ່າງບັນດາຜູ້ສະໝັກ/ຜູ້ປະກອບການສະຖານທີ່ຈັດງານ ທີ່ດຳເນີນການປະເມີນຜົນມາດຕະຖານສະຖານທີ່ຈັດງານອາຊຽນ.

ຕາຕະລາງ 9.2: ຕົວຢ່າງຂອງບັນດາອົງການຈັດຕັ້ງທີ່ລວມຢູ່ໃນຄະນະກຳມະການປະເມີນຜົນມາດຕະຖານສະຖານທີ່ຈັດງານອາຊຽນ ທີ່ສັງກັດຢູ່ໃນຄະນະກຳມະການຢັ້ງຢືນມາດຕະຖານສະຖານທີ່ຈັດງານອາຊຽນຂອງແຕ່ລະປະເທດສະມາຊິກອາຊຽນ.

| *ອົງການທ່ອງທ່ຽວພາກລັດ (ຂັ້ນສູນກາງ)* | *ອົງການທ່ອງທ່ຽວພາກລັດ (ຂັ້ນແຂວງ ຫລື ທ້ອງຖິ່ນ)* | *ອົງການ ຫລື ສະມາຄົມທີ່ບໍ່ສັງກັດລັດທີ່ຕິດພັນກັບທຸລະກິດຈັດງານ* |
|---|---|---|
| • ກະຊວງການທ່ອງທ່ຽວ<br>• ຄະນະກຳມະການທ່ອງທ່ຽວ<br>• ຄະນະກຳມະການສົ່ງເສີມການທ່ອງທ່ຽວ<br>• ຄະນະກຳມະການຈັດງານ | • ຫ້ອງການປົກຄອງຂັ້ນແຂວງ ຫລື ທ້ອງຖິ່ນ ທີ່ສົ່ງເສີມການທ່ອງທ່ຽວ ແລະ/ຫລື ພາກສ່ວນຈັດງານ | • ອົງການ ຫລື ສະມາຄົມທີ່ບໍ່ສັງກັດລັດທີ່ຕິດພັນກັບທຸລະກິດຈັດງານ |

## 9.1 ການປະເມີນ ແລະ ກວດສອບມາດຕະຖານສະຖານທີ່ຈັດງານອາຊຽນ

ການປະເມີນ ແລະ ກວດສອບມາດຕະຖານສະຖານທີ່ຈັດງານອາຊຽນ ແມ່ນປະຕິບັດຕາມຂັ້ນຕອນທີ່ລະບຸໄວ້ໃນຮູບພາບ 9.2 ດັ່ງຕໍ່ໄປນີ້:

**1. ການຄັດເລືອກເອົາສະມາຊິກ**

- ຄະນະກຳມະການຢັ້ງຢືນຈະປະກອບມີສະມາຊິກຂອງຄະນະກຳມະການປະເມີນຂັ້ນສູນກາງ ແລະ ສະມາຊິກເຫລົ່ານີ້ຈະຈັດຝຶກອົບຮົມການປະເມີນຜົນ

**2. ການຝຶກອົບຮົມ**

- ການຝຶກອົບຮົມຈັດໂດຍປະເທດສະມາຊິກອາຊຽນ.
- ຈຸດປະສົງຂອງການຝຶກອົບຮົມແມ່ນເພື່ອໃຫ້ບັນດາປະເທດສະມາຊິກມີທັກສະ ແລະ ຄວາມຮູ້ດ້ານການປະເມີນສະຖານທີ່ຈັດງານ.
- ຫລັກສູດການຝຶກອົບຮົມແມ່ນອີງຕາມມາດຕະຖານສະຖານທີ່ຈັດງານອາຊຽນ ແລະ ຄູ່ມືສະບັບນີ້.
- ການຝຶກອົບຮົມຈະຈັດຂຶ້ນປີລະຄັ້ງ.

**3. ຂັ້ນຕອນທົດລອງ**

- ຂັ້ນຕອນທົດລອງຈະດຳເນີນພາຍຫລັງທີ່ຄະນະກຳມະການສຳເລັດການຝຶກອົບຮົມດ້ານການປະເມີນຜົນ.
- ຢ່າງໜ້ອຍມີສະຖານທີ່ຈັດງານ 2 ແຫ່ງທີ່ຖືກເລືອກມາເພື່ອທົດລອງປະເມີນ.

**4. ການດຳເນີນການປະເມີນມາດຕະຖານສະຖານທີ່ຈັດງານອາຊຽນ**

- ສະມາຊິກຂອງຄະນະກຳມະການປະເມີນຜົນຈະຈັດຕັ້ງປະຕິບັດມາດຕະຖານສະຖານທີ່ຈັດງານອາຊຽນ




ຮູບພາບ 9.2: ຂັ້ນຕອນການປະເມີນ ແລະ ກວດສອບມາດຕະຖານສະຖານທີ່ຈັດງານອາຊຽນ

## 9.2 ການດຳເນີນການປະເມີນ ແລະ ກວດສອບ

ການປະເມີນ ແລະ ກວດສອບສາມາດຈັດຕັ້ງປະຕິບັດໄດ້ຕາມຮູບພາບ 9.3 ດັ່ງລາຍລະອຽດຂ້າງລຸ່ມນີ້:



## 9.3 ເງື່ອນໄຂພື້ນຖານ

ກ່ອນດຳເນີນການປະເມີນຜົນ, ຄະນະກຳມະການປະເມີນຜົນມາດຕະຖານສະຖານທີ່ຈັດງານຂັ້ນສູນກາງຕ້ອງຮັບປະກັນໃຫ້ຜູ້ສະໝັກທັງໝົດໄດ້ຄົບຕາມເງື່ອນໄຂພື້ນຖານ. ຖ້າຫາກບໍ່ໄດ້, ສະຖານທີ່ຈັດງານດັ່ງກ່າວກໍ່ຈະບໍ່ໄດ້ຕາມມາດຕະຖານສະຖານທີ່ຈັດງານອາຊຽນ.

ເງື່ອນໄຂພື້ນຖານ ໄດ້ລະບຸໄວ້ຢູ່ໃນຕາຕະລາງ 9.3 ມີລາຍລະອຽດດັ່ງຂ້າງລຸ່ມນີ້.

ຕາຕະລາງ 9.3: ເງື່ອນໄຂພື້ນຖານ ແລະ ການປະຕິບັດງານຂອງຄະນະກຳມະການປະເມີນຜົນຂັ້ນສູນກາງ.

| ເງື່ອນໄຂພື້ນຖານ | ການປະຕິບັດງານ |
|---|---|
| ▪ **ໂຮງແຮມ ຫລື ສະຖານທີ່ໃດໜຶ່ງທີ່ສະໜອງສະຖານທີ່ຈັດງານຕ້ອງໄດ້ລົງທະບຽນຢ່າງຖືກຕ້ອງຕາມກົດໝາຍພາຍໃນປະເທດຂອງຕົນ.** | ▪ ສຳເນົາໃບຢັ້ງຢືນ/ເອກະສານທີ່ກ່ຽວຂ້ອງ ແລະ ຄັດຕິດມາພ້ອມກັບໃບສະໝັກ |
| ▪ **ສະຖານທີ່ຈັດງານຕ້ອງເປີດດຳເນີນທຸລະກິດຢ່າງໜ້ອຍບໍ່ຫລຸດ 6 ເດືອນ.** | ▪ ສຳເນົາໃບຢັ້ງຢືນ/ເອກະສານທີ່ກ່ຽວຂ້ອງ ແລະ ຄັດຕິດມາພ້ອມກັບໃບສະໝັກ |

# ບົດທີ 10

## ຂັ້ນຕອນການປະເມີນຜົນ ແລະ ກວດສອບມາດຕະຖານສະຖານທີ່ຈັດງານອາຊຽນ

ການປະເມີນມາດຕະຖານສະຖານທີ່ຈັດງານອາຊຽນແມ່ນອົງປະກອບທີ່ສຳຄັນໃນຄັດເລືອກເອົາສະຖານທີ່ຈັດງານທີ່ໄດ້ມາດຕະຖານສະຖານທີ່ຈັດງານອາຊຽນ ຊຶ່ງປະກອບມີ 3 ຂັ້ນຕອນຄື:

*ຂັ້ນຕອນທີ 1: ເຜີຍແຜ່ ແລະ ຄັດເລືອກ*

ກ່ອນດຳເນີນການຢັ້ງຢືນ, ອົງການທ່ອງທ່ຽວພາກລັດຈະໄດ້ຈັດສຳມະນາ, ຈັດກອງປະຊຸມ ແລະ ຮູບແບບອື່ນໆເພື່ອເຜີຍແຜ່ ແລະ ແຈ້ງສະຖານທີ່ຈັດງານໃຫ້ຮັບຮູ້ກ່ຽວກັບມາດຕະຖານສະຖານທີ່ຈັດງານອາຊຽນ. ຫລັງຈາກນັ້ນ , ຄະນະກຳມະການປະເມີນຜົນຂັ້ນສູນກາງຈະດຳເນີນການຄັດເລືອກ ເພື່ອກຳນົດເອົາສະຖານທີ່ຈັດງານທີ່ໄດ້ຕາມມາດຖານສະຖານທີ່ຈັດງານອາຊຽນ ເພື່ອອອກໃບຢັ້ງຢືນໃຫ້.

ຜູ້ສະໝັກຕ້ອງເຂົ້າໃຈຢ່າງຈະແຈ້ງກ່ຽວກັບປະເພດທີ່ຕົນສະໝັກເພື່ອຂໍການຢັ້ງຢືນ. ອີກຢ່າງໜຶ່ງ, ຜູ້ສະໝັກຕ້ອງເລືອກໃຫ້ດີວ່າຢູ່ (ໂຮງແຮມ/ຣີສອດ, ສະຖານທີ່ຈັດງານນິທັດສະການ/ງານວາງສະແດງ ຫຼື ຢູ່ຕາມສະຖານທີ່ພາກລັດ/ພາກເອກະຊົນ. ຄະນະກຳມະການປະເມີນຜົນ ຂັ້ນສູນກາງ ຕ້ອງຄັດເລືອກໃບສະໝັກເພື່ອຄັດເອົາປະເພດທີ່ສອດຄ່ອງກັບການຢັ້ງຢືນ.

*ຂັ້ນຕອນທີ 2: ການປະເມີນຜົນ*

ການປະເມີນຜົນຈະດຳເນີນໂດຍຄະນະກຳມະການປະເມີນຜົນຂັ້ນສູນກາງ ຊຶ່ງປະກອບມີ: ການລົງປະເມີນຕົວຈິງ, ການກວດເອກະສານ ແລະ ການສຳພາດ ຊຶ່ງຈະດຳເນີນໃນເວລາປະເມີນຜົນ. ການປະເມີນຜົນແມ່ນອີງຕາມມາດຕະຖານສະຖານທີ່ຈັດງານອາຊຽນ ແລະ ຈະໄດ້ແຈ້ງວັນເວລາທີ່ຈະດຳເນີນການປະເມີນຜົນໃຫ້ແກ່ຜູ້ປະກອບການສະຖານທີ່ຈັດງານຮັບຊາບລ່ວງໜ້າກ່ອນ.

ຄະນະກຳມະການປະເມີນຜົນຂັ້ນສູນກາງ ຈະຕ້ອງເຮັດບົດລາຍງານໃຫ້ສຳເລັດ ຊຶ່ງປະກອບມີລາຍຊື່ຜູ້ປະກອບການສະຖານທີ່ຈັດງານ ເພື່ອໃຫ້ມີການຢັ້ງຢືນ ແລະ ສົ່ງໄປໃຫ້ອົງການທ່ອງທ່ຽວພາກລັດ ຢູ່ຂັ້ນສູນກາງ.

ສຳລັບຂັ້ນຕອນທີ 1 ແລະ 2 ບໍ່ຄວນເກີນ 3-4 ອາທິດ ຫລື ຕາມຄວາມເໝາະສົມ.

**ເພື່ອໃຫ້ໄດ້ຮັບລາງວັນມາດຕະຖານສະຖານທີ່ຈັດງານອາຊຽນ, ສະຖານທີ່ຈັດງານຕ້ອງໄດ້ຄະແນນຢ່າງໜ້ອຍບໍ່ຫລຸດ 75% ຂອງຄະແນນທັງໝົດ.**

*ຂັ້ນຕອນທີ 3: ການຮັບຮອງ*

ອົງການທ່ອງທ່ຽວພາກລັດຂັ້ນສູນກາງຈະນຳສະເໜີບົດລາຍງານການປະເມີນຜົນ ແລະ ບັນດາລາຍຊື່ສະຖານທີ່ຈັດງານທີ່ໄດ້ຕາມມາດຕະຖານຢູ່ທີ່ກອງປະຊຸມຂອງປະເທດສະມາຊິກອາຊຽນເພື່ອສະເໜີຮັບຮອງເອົາ. ພາຍຫລັງໄດ້ຮັບຮອງເອົາແລ້ວ, ປະເທດສະມາຊິກອາຊຽນຈະໄດ້ມອບໃບຢັ້ງຢືນ ແລະ ແຜ່ນປ້າຍລາງວັນມາດຕະຖານສະຖານທີ່ຈັດງານອາຊຽນ ໃຫ້ແກ່ສະຖານທີ່ຈັດງານທີ່ຜ່ານການປະເມີນຜົນ.




ຮູບພາບທີ 10.1: ໂຄງຮ່າງຂັ້ນຕອນການກວດສອບສຳລັບມາດຕະຖານສະຖານທີ່ຈັດງານອາຊຽນ

## 10.1 ສະຖານທີ່ຈັດງານທີ່ບໍ່ຜ່ານການປະເມີນຜົນ

ສຳລັບສະຖານທີ່ຈັດງານທີ່ບໍ່ຜ່ານການປະເມີນຜົນ, ຄະນະກຳມະການປະເມີນຜົນຂັ້ນສູນກາງ ຈະໃຫ້ຄຳແນະນຳແກ່ສະຖານທີ່ຈັດງານທີ່ດັ່ງກ່າວ ກ່ຽວກັບຂໍ້ບົກຜ່ອງທີ່ຕ້ອງໄດ້ປັບປຸງ ແລະ ແກ້ໄຂ.

ສະຖານທີ່ຈັດງານມີເວລາ 1 – 6 ເດືອນ ຂຶ້ນຢູ່ກັບໄລຍະເວລາທີ່ຕ້ອງການ ເພື່ອດຳເນີນການປັບປຸງ. ພາຍຫລັງສຳເລັດປັບປຸງຂໍ້ບົກຜ່ອງແລ້ວ, ຜູ້ສະໝັກຕ້ອງສົ່ງແບບຟອມການປັບປຸງດັ່ງກ່າວນັ້ນໃຫ້ແກ່ຄະນະກຳມະການປະເມີນຜົນມາດຕະຖານສະຖານທີ່ຈັດງານອາຊຽນຂັ້ນສູນກາງ ເພື່ອດຳເນີນການປະເມີນຜົນຄືນ. ການປະເມີນຜົນຄືນຈະປະເມີນແຕ່ຂໍ້ບົກຜ່ອງທີ່ຍັງບໍ່ໄດ້ຕາມມາດຕະຖານຈາກການປະເມີນຄັ້ງທຳອິດເທົ່ານັ້ນ. ຮູບພາບທີ 10.2 ຢູ່ຂ້າງລຸ່ມນີ້ສະແດງເຖິງຂັ້ນຕອນການປະເມີນຜົນ.




ຮູບພາບທີ 10.2: ຂັ້ນຕອນການປະເມີນຜົນຄືນສຳລັບຜູ້ປະກອບການສະຖານທີ່ຈັດງານທີ່ບໍ່ຜ່ານການປະເມີນຜົນ

## 10.2 ສະຖານທີ່ຈັດງານທີ່ຜ່ານການປະເມີນຜົນ

ສຳລັບສະຖານທີ່ຈັດງານທີ່ຜ່ານການປະເມີນຜົນ ແມ່ນຈະໄດ້ຮັບໃບຢັ້ງຢືນ ແລະ ແຜ່ນປ້າຍລາງວັນທີ່ອອກໃຫ້ໂດຍບັນດາປະເທດສະມາຊິກອາຊຽນ.

ແຜ່ນປ້າຍລາງວັນມາດຕະຖານສະຖານທີ່ຈັດງານອາຊຽນ ແມ່ນເຮັດມາຈາກໂລຫະເຄືອບສີຄຳ, ຄັດຕິດໃສ່ກັບແຜ່ນໄມ້ສີງາຊ້າງ. ແຜ່ນປ້າຍລາງວັນມີຂະໜາດ 20.5 ຊັງຕີແມັດ x 15.5 ຊັງຕີແມັດ. ມີຂອບໄມ້ສີງາຊ້າງ 2 ຊັງຕີແມັດ.

# ບົດທີ 11

## ໄລຍະເວລາການຢັ້ງຢືນ

ໄລຍະເວລາການຢັ້ງຢືນສໍາລັບມາດຕະຖານສະຖານທີ່ຈັດງານອາຊຽນແມ່ນ 3 ປີ. ສະຖານທີ່ຈັດງານທີ່ໄດ້ຕາມມາດຕະຖານ ຈະຖືກປະເມີນຄືນທຸກໆ 3 ປີ ເພື່ອຕໍ່ໃບຢັ້ງຢືນຄືນໃໝ່. ສິ່ງດັ່ງກ່າວນີ້ຈະເຮັດໃຫ້ອົງການທ່ອງທ່ຽວພາກລັດສາມາດປັບປຸງ ແລະ ກວດສອບການປະຕິບັດງານຂອງສະຖານທີ່ຈັດງານທີ່ໄດ້ຕາມມາດຕະຖານ ເພື່ອຮັບປະກັນໃຫ້ໄດ້ຄຸນະພາບ ແລະ ມາດຕະຖານດັ່ງທີ່ໄດ້ລະບຸໄວ້ຢູ່ໃນມາດຕະຖານສະຖານທີ່ຈັດງານອາຊຽນ.

# ບົດທີ 12

## ຜົນປະໂຫຍດ ແລະ ສິດທິພິເສດ

ຜົນປະໂຫຍດ ແລະ ສິດທິພິເສດທີ່ໄດ້ຮັບຈາກລາງວັນມາດຕະຖານສະຖານທີ່ຈັດງານອາຊຽນ ສ່ວນຫລາຍຈະແມ່ນຜົນປະໂຫຍດດ້ານການຕະຫລາດ ແລະ ການໂຄສະນາ ທີ່ດຳເນີນການໂດຍບັນດາອົງການພາກລັດ. ສິ່ງສຳຄັນຄື ສະຖານທີ່ຈັດງານທີ່ໄດ້ຮັບລາງວັນດັ່ງກ່າວຈະໄດ້ຮັບຜົນປະໂຍດຈາກກາເຄື່ອງໝາຍມາດຕະຖານສະຖານທີ່ຈັດງານອາຊຽນ ຊຶ່ງເປັນການຮັບຮູ້ໃນລະດັບສາກົນ. ລາຍລະອຽດຂອງຜົນປະໂຫຍດຈາກການໄດ້ຮັບການຢັ້ງຢືນມາດຕະຖານດັ່ງກ່າວອາດມີຄວາມແຕກຕ່າງກັນຢູ່ໃນປະເທດສະມາຊິກອາຊຽນ ດັ່ງລາຍລະອຽດຂ້າງລຸ່ມນີ້:

- ຈະໄດ້ຮັບໃບຢັ້ງຢືນ, ເຄື່ອງໝາຍ ແລະ ແຜ່ນປ້າຍລາງວັນມາດຕະຖານສະຖານທີ່ຈັດງານອາຊຽນ ເພື່ອວາງສະແດງໄວ້ຢູ່ຕາມບ່ອນເຮັດວຽກ;
- ຈະໄດ້ຮັບການໂຄສະນາໃນເວັບໄຊທາງການຂອງອາຊຽນ (http://www.asean.org)
- ຈະໄດ້ຮັບການໂຄສະນາຢູ່ຕາມງານນິເທດສະການການທ່ອງທ່ຽວລະດັບສາກົນ, ງານບຸນ ແລະ ກອງປະຊຸມຕ່າງໆ;
- ຈະໄດ້ຮັບບຸລິມະສິດພິເສດດ້ານການໂຄສະນາທາງເວັບໄຊ ແລະ ແຜ່ນພັບຂອງອົງການທ່ອງທ່ຽວແຫ່ງຊາດ;
- ຈະໄດ້ຮັບບຸລິມະສິດພິເສດໃນການເຂົ້າຮ່ວມງານມະຫາກຳທ່ອງທ່ຽວລະດັບຊາດ ແລະ ລະດັບສາກົນ ທີ່ຈັດໂດຍບັນດາອົງການທ່ອງທ່ຽວແຫ່ງຊາດ.

# ບົດທີ 13

## ເຄື່ອງໝາຍການຢັ້ງຢືນ

ເຄື່ອງໝາຍການຢັ້ງຢືນສຳລັບສຳລັບມາດຕະຖານສະຖານທີ່ຈັດງານອາຊຽນ ມີຄື:




ຮູບພາບທີ 13: ມາດຕະຖານສະຖານທີ່ຈັດງານອາຊຽນ (ປະເພດສະຖານທີ່ຈັດງານວາງສະແດງ)
20xx – 20xx

ເຄື່ອງໝາຍມາດຕະຖານສະຖານທີ່ຈັດງານອາຊຽນແມ່ນນຳໃຊ້ເຄື່ອງໝາຍມາດຕະຖານການທ່ອງທ່ຽວອາຊຽນສຳລັບທຸກການຢັ້ງຢືນ. ຄວາມໝາຍຂອງເຄື່ອງໝາຍດັ່ງກ່າວມີຄືດັ່ງນີ້:

1. ດອກໄມ້ຄ້າຍຄືດອກບົວ ໝາຍເຖິງ ພືດໃນຕຳນານ ທີ່ກໍ່ໃຫ້ເກີດຄວາມມ່ວນຊື່ນຢ່າງຫຼູຫຼາ, ຄວາມສະຫງົບ, ຄວາມສວຍງາມ, ການຮັບຮູ້ການໄດ້ຮັບລາງວັນ ແລະ ການຈັດມາດຕະຖານການບໍລິການດ້ານການທ່ອງທ່ຽວອາຊຽນ;
2. ກີບດອກບົວອ້ອມເຄື່ອງໝາຍອາຊຽນໝາຍເຖິງຄວາມປານີປະນອມຂອງບັດນາປະເທດສະມາອາຊຽນ;
3. ເງົາສີຂຽວທີ່ມີສີແຕກຕ່າງກັນໝາຍເຖິງການອະນຸລັກສິ່ງແວດລ້ອມ, ຄວາມອຸດົມສົມບູນ, ການຂະຫຍາຍຕົວ, ການເພີ່ມຂຶ້ນຂອງຜະລິດຕະພັນໃນອຸດສາຫະກຳທ່ອງທ່ຽວ. (ແຫລ່ງທີ່ມາ: ປື້ມມາດຕະຖານການທ່ອງທ່ຽວອາຊຽນ, 2007).

# ບົດທີ 14

## ຄຳແນະນຳສຳລັບການປະເມີນສະຖານທີ່ຈັດງານອາຊຽນ

ຄຳແນະນຳສຳລັບການປະເມີນສະຖານທີ່ຈັດງານອາຊຽນ ໝາຍເຖິງບັດໃຫ້ຄະແນນທີ່ສະມາຊິກຂອງຄະນະກຳມະການປະເມີນຜົນຂັ້ນສູນກາງ ນຳໃຊ້ເຂົ້າໃນການ "ປະເມີນຜົນ" ສະຖານທີ່ຈັດງານ. ຄຳແນະນຳການປະເມີນຜົນແມ່ນປະຕິບັດຕາມຕົວຊີ້ວັດຂອງມາດຕະຖານສະຖານທີ່ຈັດງານອາຊຽນ ພ້ອມດ້ວຍວິທີການປະເມີນຜົນ ແລະ ຫລັກຖານ. ຕາຕະລາງທີ 14.1 ສະຫຼຸບວິທີການປະເມີນ ແລະ ຫລັກຖານທີ່ນຳໃຊ້ໃນການປະເມີນສະຖານທີ່ຈັດງານ.

ຕາຕະລາງ 14.1 ວິທີການປະເມີນ ແລະ ຫລັກຖານ

| ວິທີການປະເມີນ | ຫລັກຖານ |
|---|---|
| **ການສຳພາດ** | ບົດບັນທຶກການສຳພາດ |
| **ການກວດເອກະສານ** | ເອກະສານທີ່ກ່ຽວຂ້ອງ |
| **ການກວດສອບຕົວຈິງ** | ຮູບພາບ ແລະ/ຫລື ຄຳຄິດເຫັນທີ່ຂຽນເປັນລາຍລັກອັກສອນ |

ຄຳແນະນຳສຳລັບການປະເມີນມາດຕະຖານສະຖານທີ່ຈັດງານອາຊຽນ ແມ່ນລະບຸໄວ້ຢູ່ໃນຕາຕະລາງ 14.2.

ຕາຕະລາງ 14.2 ຄຳແນະນຳສຳລັບການປະເມີນມາດຕະຖານສະຖານທີ່ຈັດງານອາຊຽນ

| **ດ້ານກາຍຍະພາບ (Physical)** | | | | | | |
|---|---|---|---|---|---|---|
| **ປະເພດ** | | **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ວິທີການປະເມີນ ແລະ ຫລັກຖານ** | **ຄະແນນທີ່ໄດ້** | **ຄຳຄິດເຫັນ** |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| **ດ້ານກາຍະພາບຂອງຫ້ອງວາງສະແດງ ແລະ ບ່ອນຈັດງານ** | | | | | | |
| ✓ | ✓ | **P01 – ສະພາບ ແລະ ຄວາມສະອາດຂອງຫ້ອງວາງສະແດງ**<br>• ບໍ່ມີສິ່ງກີດຂວາງຢູ່ເທິງເພດານ ຫຼື ໂຄງສ້າງຫຼັງຄາໃນລະດັບຄວາມສູງ 8-12 ແມັດ (ສຳລັບຫ້ອງວາງສະແດງປະເພດ 1) ແລະ 5-7 ແມັດ (ສຳລັບຫ້ອງວາງສະແດງປະເພດ 2).<br>• ພື້ນ, ຝາ ແລະ ເພດານຂອງຫ້ອງວາງສະແດງສະອາດດີ, | 3 ໄດ້ຄົບທຸກຂໍ້<br>2 ໄດ້ສອງຂໍ້<br>1 ໄດ້ໜຶ່ງຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | ບໍ່ມີຂີ້ຝຸ່ນ, ບໍ່ມີສິ່ງເສດເຫຼືອ ແລະ ບໍ່ມີຮອຍເປິເປື້ອນ<br>• ຫ້ອງວາງສະແດງບໍ່ມີກິ່ນເໝັນອັບ. | | | | |
| ✓ | ✓ | **P02 – ເຄື່ອງຍົກນ້ຳໜັກ**<br>• ມີການລະບຸນ້ຳໜັກຈຳກັດຢູ່ແຕ່ລະຈຸດທີ່ຕ້ອງການຍົກ.<br>• ມີແຜນຜັງສະແດງຕຳແໜ່ງການຍົກ.<br>• ເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ສອງຂໍ້<br>1 ໄດ້ໜຶ່ງຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| **ຂອບເຂດຫ້ອງວາງສະແດງ** | | | | | | |
| ✓ | ✓ | **P03 – ພື້ນທີ່ກະກຽມຈັດງານ**<br>• ສະອາດ ແລະ ເປັນລະບຽບດີ.<br>• ມີດອກໄຟ.<br>• ມີຮູປັກສຽບພຽງພໍ.<br>• ມີເຄື່ອງປັບອາກາດ ແລະ ລະບົບລະບາຍອາກາດພຽງພໍ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **P04 – ບ່ອນຕ້ອນຮັບ ແລະ ລົງທະບຽນ**<br>• ສະອາດ ແລະ ເປັນລະບຽບດີ.<br>• ຕັ້ງຢູ່ດ້ານໜ້າທາງເຂົ້າຫ້ອງວາງສະແດງ.<br>• ມີຮູປັກສຽບພຽງພໍ.<br>• ມີປ້າຍທີ່ແນມເຫັນໄດ້ງ່າຍ ແລະ ໝັ້ນຄົງ.<br>• ມີລະບົບເຄື່ອງຂະຫຍາຍສຽງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | | **P05 – ຫ້ອງປະຊຸມ ຫ້ອງວາງສະແດງປະເພດ 1** | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້ | • ກວດສອບຕົວຈິງ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | • ມີຫ້ອງຖາວອນທີ່ສະອາດ ແລະ ເປັນລະບຽບດີ.<br>• ຕັ້ງຢູ່ໃກ້ກັບຫ້ອງວາງສະແດງ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີໂຕະ ແລະ ຕັ່ງພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| | ✓ | **ຫ້ອງວາງສະແດງປະເພດ 2**<br>• ມີພື້ນທີ່ທີ່ສາມາດຕິດຕັ້ງຈັດງານໄດ້ທີ່ສະອາດ ແລະ ເປັນລະບຽບດີ.<br>• ຕັ້ງຢູ່ໃກ້ກັບຫ້ອງວາງສະແດງ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີໂຕະ ແລະ ຕັ່ງພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | | **P06 – ຫ້ອງຕ້ອນຮັບແຂກ VIP**<br>**ຫ້ອງວາງສະແດງປະເພດ 1**<br>• ມີຫ້ອງຖາວອນທີ່ສະອາດ ແລະ ເປັນລະບຽບດີ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີຫ້ອງນ້ຳສ່ວນຕົວ<br>• ມີໂຕະ ແລະ ຕັ່ງ ຫຼື ຕັ່ງຊາໂລງ (ໂຊຟາ) ພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| | ✓ | **ຫ້ອງວາງສະແດງປະເພດ 2** | 3 ໄດ້ຄົບທຸກຂໍ້ | • ກວດສອບຕົວຈິງ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | • ມີພື້ນທີ່ທີ່ສາມາດຕິດຕັ້ງຈັດງານໄດ້ທີ່ສະອາດ ແລະ ເປັນລະບຽບດີ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີໂຕະ ແລະ ຕັ່ງ ຫຼື ຕັ່ງຊາໂລງ (ໂຊຟາ) ພຽງພໍ. | 2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | | **P07 – ຫ້ອງຖະແຫຼງຂ່າວ**<br>**ຫ້ອງວາງສະແດງປະເພດ 1**<br>• ມີຫ້ອງຖາວອນທີ່ສະອາດ ແລະ ເປັນລະບຽບດີ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີຫ້ອງນໍ້າສ່ວນຕົວ<br>• ມີໂຕະ ແລະ ຕັ່ງ ຫຼື ບ່ອນນັ່ງເຮັດວຽກ.<br>• ມີອຸປະກອນ ຫຼື ເຄື່ອງໃຊ້ຫ້ອງການພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| | ✓ | **ຫ້ອງວາງສະແດງປະເພດ 2**<br>• ມີພື້ນທີ່ທີ່ສາມາດຕິດຕັ້ງຈັດງານໄດ້ທີ່ສະອາດ ແລະ ເປັນລະບຽບດີ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີຫ້ອງນໍ້າສ່ວນຕົວ<br>• ມີໂຕະ ແລະ ຕັ່ງ ຫຼື ບ່ອນນັ່ງເຮັດວຽກ.<br>• ມີອຸປະກອນ ຫຼື ເຄື່ອງໃຊ້ຫ້ອງການພຽງພໍ.<br>• ມີອິນເຕີເນັດ (Wi-Fi) ຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| ✓ | ✓ | **P08 – ຫ້ອງໄຫວ້** | 3 ມີຫ້ອງໄຫວ້ຖາວອນ ຫລືສາມາດສ້າງຂຶ້ນໃໝ່ໄດ້, ແຍກຫ້ອງຍິງ/ຊາຍ ແລະ ມີສິ່ງອຳນວຍຄວາມສະດວກທີ່ເໝາະສົມ.<br>2 ມີຫ້ອງທີ່ສາມາດສ້າງເປັນຫ້ອງໄຫວ້, ແຍກຫ້ອງຍິງ/ຊາຍ ແລະ ມີສິ່ງອຳນວຍຄວາມສະດວກຈຳນວນໜຶ່ງ<br>1 ມີຫ້ອງທີ່ສາມາດສ້າງເປັນຫ້ອງໄຫວ້ ແລະ ແຍກຫ້ອງຍິງ/ຊາຍ.<br>0 ພື້ນທີ່ດັ່ງກ່າວບໍ່ສາມາດສ້າງ ເປັນຫ້ອງໄວ້ໄດ້. | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **P09 – ສິ່ງອຳນວຍຄວາມສະດວກສຳລັບຄົນພິການ** | 3 ມີສິ່ງອຳນວຍຄວາມສະດວກສຳລັບຄົນພິການຢ່າງພຽງພໍ ແລະ ມີພະນັກງານໄດ້ຮັບການຝຶກອົບຮົມເພື່ອບໍລິການຄົນພິການທີ່ເຂົ້າຮ່ວມງານ.<br>2 ມີສິ່ງອຳນວຍຄວາມສະດວກສຳລັບຄົນພິການຢ່າງພຽງພໍ.<br>1 ມີສິ່ງອຳນວຍຄວາມສະດວກສຳລັບຄົນພິການຈຳນວນຈຳກັດ.<br>0 ບໍ່ມີສິ່ງອຳນວຍຄວາມສະດວກສຳລັບຄົນພິການ. | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **P10 – ຫ້ອງອາຫານ**<br>• ມີພື້ນທີ່ທີ່ສາມາດຈັດເປັນຫ້ອງອາຫານເພື່ອບໍລິການອາຫານໃຫ້ແກ່ຜູ້ເຂົ້າຮ່ວມງານ.<br>• ສະອາດ ແລະ ເປັນລະບຽບດີ<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 5 ຂໍ້<br>1 ໄດ້ 4 ຂໍ້<br>0 ໄດ້ໜ້ອຍກວ່າ 4 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄໍາຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | • ມີລະບົບລະບາຍອາກາດພຽງພໍ.<br>• ມີເນື້ອທີ່ພຽງພໍສໍາລັບການກະກຽມອາຫານ ພ້ອມອຸປະກອນປຸງແຕ່ງອາຫານຂັ້ນພື້ນຖານ.<br>• ມີບັນຊີລາຍຊື່ຜູ້ສະໜອງອາຫານໃນກໍລະນີມີຄວາມຕ້ອງການ. | | | | |
| **ເຂດສາທາລະນະ** | | | | | | |
| ✓ | ✓ | **P11 – ການເຂົ້າເຖິງຫ້ອງວາງສະແດງ**<br>• ມີທາງເຂົ້າທີ່ເຊື່ອມຕໍ່ກັບຫ້ອງວາງສະແດງເພື່ອເຮັດໃຫ້ມີຄວາມສະດວກໃນການຈະລາຈອນ<br>• ມີທາງເຂົ້າ-ອອກຫ້ອງວາງສະແດງໄປຫາຖະໜົນຫຼວງຫຼາຍທາງ.<br>• ມີທາງເຂົ້າຫາສະຖານທີ່ວາງສະແດງຈາກສະຖານີຂົນສົ່ງສາທາລະນະ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄໍາຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **P12 – ປ້າຍຊີ້ບອກ**<br>• ມີປ້າຍຊີ້ບອກຕິດຕັ້ງຖາວອນ.<br>• ມີປ້າຍຊີ້ບອກທີ່ຕິດຕັ້ງຢູ່ບ່ອນທີ່ເຫັນໄດ້ງ່າຍ ແລະ ເປັນລະບຽບດີ.<br>• ມີປ້າຍດິຈິຕອລ (Digital).<br>• ມີປ້າຍເປັນພາສາອັງກິດ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄໍາຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **P13 – ປ້າຍຊີ້ບອກທາງເຂົ້າຫຼັກ**<br>• ຕິດຕັ້ງຢູ່ບ່ອນທີ່ເບິ່ງເຫັນໄດ້ງ່າຍ.<br>• ມີແສງສະຫວ່າງພຽງພໍ.<br>• ໝັ້ນຄົງ ແລະ ຖາວອນ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄໍາຄິດເຫັນທີ່ເປັນລາຍລັກອັກສອນ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| **ປະເພດ** | | **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ວິທີການປະເມີນ ແລະ ຫລັກຖານ** | **ຄະແນນທີ່ໄດ້** | **ຄຳຄິດເຫັນ** |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | • ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | | ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **P14 – ເຄື່ອງໃຊ້ໃນຫ້ອງນ້ຳ**<br>ມາດຕະຖານຫ້ອງນ້ຳສາທາລະນະອາຊຽນ<br>• ມີເຄື່ອງໃຊ້ ແລະ ອຸປະກອນຕ່າງໆ<br>• ຫ້ອງນ້ຳແຕ່ລະຫ້ອງມີເນື້ອທີ່ເໝາະສົມ.<br>• ມີເຄື່ອງໃຊ້ພຽງພໍສຳລັບຄົນພິການ ແລະ ຜູ້ສູງອາຍ.<br>• ມີຕູ້ໃສ່ເຄື່ອງພຽງພໍ ສຳລັບທ່ານຍິງ ແລະ ທ່ານຊາຍ.<br>• ມີເຄື່ອງໃຊ້ພຽງພໍ ເຊັ່ນ: ເຈ້ຍທິດຊູ, ສະບູ ແລະ ອື່ນໆ.<br>• ມີຫ້ອງປ່ຽນຜ້າອ້ອມ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 2-3 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **P15 – ບ່ອນສູບຢາ** | 3 ມີຫ້ອງສູບຢາ ຕາມກົດໝາຍທີ່ກ່ຽວຂ້ອງ ແລະ ຫ້ອງສູບຢາຕ້ອງໃຊ້ງານໄດ້.<br>2 ມີຫ້ອງສູບຢາ ຕາມກົດໝາຍທີ່ກ່ຽວຂ້ອງ.<br>1 ມີບ່ອນສູບຢາ ແຕ່ບໍ່ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ.<br>0 ບໍ່ມີບ່ອນສູບຢາ. | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **P16 – ບ່ອນຮັບ-ສົ່ງ**<br>• ຕັ້ງຢູ່ໃກ້ກັບທາງເຂົ້າສະຖານທີ່ວາງສະແດງ.<br>• ມີຫຼັງຄາມຸງຢ່າງດີ.<br>• ມີປ້າຍຊີ້ບອກທີ່ເບິ່ງເຫັນໄດ້ຈະແຈ້ງດີ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **P17 – ບ່ອນຈອດລົດສຳລັບຜູ້ເຂົ້າຮ່ວມງານ**<br>• ມີບ່ອນຈອດລົດສຳລັບລົດປະເພດຕ່າງໆ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | • ມີບ່ອນຈອດລົດສຳລັບຄົນພິການ.<br>• ມີປ້າຍ ແລະ ເຄື່ອງໝາຍຈະລາຈອນທີ່ເບິ່ງເຫັນໄດ້ງ່າຍ.<br>• ມີກ້ອງວົງຈອນປິດ (CCTV) ຫຼື ພະນັກງານຍາມຢູ່ບ່ອນຈອດລົດ.<br>• ໃນກໍລະນີບໍ່ມີບ່ອນຈອດລົດ ຫຼື ມີບ່ອນຈອດລົດບໍ່ພຽງພໍ, ສາມາດໃຊ້ບ່ອນຈອດລົດແຫ່ງອື່ນທີ່ຈັດໄວ້ສະເພາະ ແລະ ມີມາດຕະຖານຄວາມປອດໄພຄ້າຍຄືກັນ. | | | | |
| ✓ | ✓ | **P18 – ການຈັດການການຈະລາຈອນໃນຊ່ວງຈັດງານວາງສະແດງ**<br>• ມີແຜນການຈັດການການຈະລາຈອນທີ່ເປັນລະບົບ.<br>• ມີພະນັກງານຮັບຜິດຊອບຈັດການການຈະລາຈອນ.<br>• ມີເສັ້ນທາງສະເພາະຜູ້ເຂົ້າຮ່ວມງານ ແລະ ລົດບັນທຸກສິນຄ້າ.<br>• ມີແຈ້ງການກ່ຽວກັບລະບຽບການຈະລາຈອນສຳລັບງານວາງສະແດງໃຫ້ແກ່ປະຊາຊົນອ້ອມຂ້າງຮັບຊາບ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **P19 – ລະບົບນ້ຳ ແລະ ສຸຂະອະນາໄມ**<br>• ມີຈຸດແຈກນ້ຳໃນສະພາບດີ.<br>• ມີລະບົບລະບາຍນ້ຳເສຍທີ່ດີ ແລະ ໄດ້ຕາມມາດຕະຖານພາຍໃນປະເທດ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | • ມີເອກະສານການກວດກາ ຫຼື ສ້ອມແປງປະຈຳປີ. | | | | |
| ✓ | | **P20 – ລະບົບເກັບນ້ຳ**<br>• ລະບົບເກັບນ້ຳຢູ່ໃນສະພາບທີ່ດີ.<br>• ລະບົບເກັບນ້ຳຕ້ອງສອດຄ່ອງກັບກິດໝາຍພາຍໃນປະເທດ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| **ອຸປະກອນປ້ອງກັນຄວາມປອດໄພ/ຄວາມສະອາດ/ເຫດສຸກເສີນ** | | | | | | |
| ✓ | ✓ | **P21 – ອຸປະກອນປ້ອງກັນຄວາມປອດໄພ**<br>• ມີກ້ອງວົງຈອນປິດ ແລະ ຫ້ອງຄວບຄຸມພ້ອມພະນັກງານປະຈຳຕະຫຼອດເວລາ.<br>• ສະຖານທີ່ວາງສະແດງມີກົດລະບຽບການເປີດກ້ອງວົງຈອນປິດເພື່ອເບິ່ງຄືນ.<br>• ມີອຸປະກອນຈັບຂວັນ ຫຼື ຄວາມຮ້ອນ.<br>• ມີເຄື່ອງສີດນ້ຳເວລາມີໄຟໄໝ້.<br>• ມີບັ້ງດັບເພີງ ຫຼື ສາຍດັບເພີງຕິດຕັ້ງຢ່າງເໝາະສົມ ແລະ ສະດວກແກ່ການນຳໃຊ້.<br>• ມີໄຟແຈ້ງເຕືອນທີ່ສາມາດເບິ່ງເຫັນໄດ້ດີ.<br>• ມີເອກະສານການກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 5-6 ຂໍ້<br>1 ໄດ້ 3-4 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **P22 – ເຫດສຸກເສີນ, ຄວາມປອດໄພ ແລະ ຄວາມສະອາດສຳລັບຫ້ອງວາງສະແດງ**<br>• ອຸປະກອນຮັບມືກັບເຫດສຸກເສີນ, ທາງໜີໄຟ ແລະ ທາງ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 6 ຂໍ້<br>1 ໄດ້ 5 ຂໍ້<br>0 ໄດ້ໜ້ອຍກວ່າ 5 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| **ປະເພດ** | | **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ວິທີການປະເມີນ ແລະ ຫລັກຖານ** | **ຄະແນນທີ່ໄດ້** | **ຄຳຄິດເຫັນ** |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | ອົບພະຍົກຕ້ອງສອດຄ່ອງກັບກົດໝາຍພາຍໃນ.<br>• ມີປ້າຍທາງໜີໄຟຕິດຕັ້ງຖາວອນ ແລະ ຢູ່ໃນສະພາບດີ.<br>• ມີແຜ່ນປ້າຍຊີ້ບອກທີ່ເຫັນໄດ້ດີພ້ອມມີຄຳແນະນຳກ່ຽວກັບການດັບໄຟ ແລະ ໜີໄຟ.<br>• ມີພະນັກງານຍາມພຽງພໍຢູ່ຕາມທາງເຂົ້າຫຼັກໄປຫາຫ້ອງວາງສະແດງ, ສະຖານທີ່ວາງສະແດງ ແລະ ພື້ນທີ່ກະກຽມຈັດງານ.<br>• ມີກ້ອງວົງຈອນປິດ ຫຼື ອຸປະກອນປ້ອງກັນຄວາມປອດໄພຕ່າງໆ ຈຳນວນພຽງພໍຢູ່ໃນພື້ນທີ່ສຳຄັນຂອງຫ້ອງວາງສະແດງ, ສະຖານທີ່ວາງສະແດງ ແລະ ພື້ນທີ່ກະກຽມຈັດງານ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ.<br>• ມີຫຼັກຖານການຝຶກຊ້ອມດັບໄຟປະຈຳປີ. | | ລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **P23 – ຫ້ອງປະຖົມພະຍາບານ ແລະ ພະນັກງານປະຖົມພະຍາບານ** | 3 ມີພະຍາບານ/ພະນັກງານປະຖົມພະຍາບານປະຈຳ ຫລື ຊົ່ວຄາວໃນຊ່ວງຈັດງານ ແລະ ມີຫ້ອງປະຖົມພະຍາບານ.<br>2 ມີພະຍາບານ/ພະນັກງານປະຖົມພະຍາບານປະຈຳ ຫລື ຊົ່ວຄາວໃນຊ່ວງຈັດງານ ແລະ ມີເຄື່ອງປະຖົມພະຍາບານຈຳນວນໜຶ່ງ.<br>1 ບໍ່ມີພະຍາບານ/ພະນັກງານປະຖົມພະຍາບານ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄໍາຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | | ປະຈໍາ ຫລື ຊົ່ວຄາວໃນຊ່ວງຈັດງານ. ມີພຽງແຕ່ເຄື່ອງປະຖົມພະຍາບານຈໍານວນໜຶ່ງ.<br>0 ບໍ່ມີພະຍາບານ/ພະນັກງານປະຖົມພະຍາບານປະຈໍາ ຫລື ຊົ່ວຄາວໃນຊ່ວງຈັດງານ ແລະ/ຫລື ບໍ່ມີເຄື່ອງປະຖົມພະຍາບານ/ບໍ່ມີຫ້ອງປະຖົມພະຍາບານ. | | | |
| ✓ | ✓ | **P24 – ການຈັດການກັບຝູງຊົນ ແລະ ຂັ້ນຕອນການອົບພະຍົກຄົນ**<br>• ມີແຜນຜັງຂອງສະຖານທີ່ຈັດງານວາງສະແດງ.<br>• ມີແຜນຜັງຂອງຫ້ອງວາງສະແດງ.<br>• ມີແຜນອົບພະຍົກຄົນໃນກໍລະນີມີເຫດສຸກເສີນ.<br>• ມີຫຼັກຖານການຝຶກອົບຮົມໃຫ້ແກ່ພະນັກງານກ່ຽວກັບການຈັດການກັບຝູງຊົນ ແລະ ຂັ້ນຕອນການອົບພະຍົກຄົນ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄໍາຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **P25 – ລະບຽບການປະກັນໄພ** | 3 ມີລະບຽບການປະກັນໄພທີ່ລະບຸຢູ່ໃນສັນຍາ.<br>0 ບໍ່ມີລະບຽບການປະກັນໄພ. | • ກວດເອກະສານ<br>• ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **P26 – ການສ້ອມແປງ**<br>• ມີພະແນກສ້ອມແປງສະເພາະ<br>• ມີແຜນການສ້ອມແປງ<br>• ມີຫຼັກຖານການກວດກາ, ການລາຍງານ ແລະ ການບໍາລຸງຮັກສາສິ່ງອໍານວຍຄວາມ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດເອກະສານ<br>• ເອກະສານທີ່ກ່ຽວຂ້ອງ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| **ປະເພດ** | | **ຕົວຊີ້ວັດ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ວິທີການປະເມີນ ແລະ ຫລັກຖານ** | **ຄະແນນທີ່ໄດ້** | **ຄຳຄິດເຫັນ** |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | ສະດວກ ແລະ ອຸປະກອນຂອງສະຖານທີ່ຈັດງານວາງສະແດງ. | | | | |
| **ການເຂົ້າເຖິງຫ້ອງວາງສະແດງຂອງຜູ້ຈັດງານ** | | | | | | |
| ✓ | ✓ | **P27 – ບ່ອນຈອດລົດບັນທຸກສິນຄ້າ**<br>• ມີລະບົບຈັດແຖວສຳລັບຈອດລົດບັນທຸກສິນຄ້າ.<br>• ມີລະບົບບັນຈຸ ແລະ ຂົນເຄື່ອງ.<br>• ມີພະນັກງານປະສານງານ ຫຼື ຊ່ວຍວຽກ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | | **P28 – ບ່ອນບັນຈຸເຄື່ອງ**<br>(ໃນກໍລະນີຫ້ອງວາງສະແດງຕັ້ງຢູ່ຊັ້ນທີ່ບໍ່ມີບ່ອນຈອດລົດ, ຕ້ອງມີລິບຂົນເຄື່ອງ).<br>**ຫ້ອງວາງສະແດງປະເພດ 1**<br>• ຢ່າງໜ້ອຍຕ້ອງມີປະຕູສຳລັບຂົນເຄື່ອງໜຶ່ງປະຕູຕໍ່ຫ້ອງວາງສະແດງ. ຖ້າຫ້ອງວາງສະແດງສາມາດແບ່ງອອກເປັນຫຼາຍຫ້ອງ, ຈຳນວນປະຕູສຳລັບຂົນເຄື່ອງກໍ່ຕ້ອງມີຈຳນວນເທົ່າກັນກັບຈຳນວນຫ້ອງວາງສະແດງ.<br>• ປະຕູສຳລັບຂົນເຄື່ອງຕ້ອງຢູ່ໃນສະພາບດີ ແລະ ປອດໄພ.<br>• ມີລະບົບແສງສະຫວ່າງ ແລະ ລະບາຍອາກາດ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| | ✓ | **ຫ້ອງວາງສະແດງປະເພດ 2**<br>• ຢ່າງໜ້ອຍຕ້ອງມີປະຕູສຳລັບຂົນເຄື່ອງໜຶ່ງປະຕູຕໍ່ຫ້ອງວາງສະແດງ. ຖ້າຫ້ອງວາງສະ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |

| ດ້ານກາຍຍະພາບ (Physical) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | ແດງສາມາດແບ່ງອອກເປັນຫຼາຍຫ້ອງ, ຈຳນວນປະຕູສຳລັບຂົນເຄື່ອງກໍ່ຕ້ອງມີຈຳນວນເທົ່າກັນກັບຈຳນວນຫ້ອງວາງສະແດງ.<br>• ປະຕູ ແລະ ລິບສຳລັບຂົນເຄື່ອງຕ້ອງຢູ່ໃນສະພາບດີ ແລະ ປອດໄພ.<br>• ມີທັງລະບົບແສງສະຫວ່າງ ແລະ ລະບາຍອາກາດ. | | | | |
| ✓ | ✓ | **P29 – ຫ້ອງສຳລັບຜູ້ຈັດງານ**<br>• ສະອາດ ແລະ ເປັນລະບຽບດີ.<br>• ຕັ້ງຢູ່ໃກ້ຫ້ອງວາງສະແດງ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູບັກສຽບ.<br>• ມີໂຕະ ແລະ ຕັ່ງພຽງພໍ.<br>• ມີອິນເຕີເນັດຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **P30 –ໄລຍະເວລາກະກຽມງານສຳລັບຜູ້ຈັດງານ** | 3 ມີລະບຽບການກະກຽມງານ ແລະ ແຈ້ງລະບຽບນັ້ນໃຫ້ຜູ້ຈັດງານຮັບຊາບເປັນຢ່າງດີ.<br>0 ບໍ່ມີລະບຽບ ແລະ ຜູ້ຈັດງານກໍ່ບໍ່ສາມາດເຂົ້າໄປກະກຽມກ່ອນເປີດງານ | • ກວດເອກະສານ ແລະ ສໍາພາດ<br>• ເອກະສານທີ່ກ່ຽວຂ້ອງ ແລະ ບົດລາຍງານການສຳພາດ | | |
| **30** | **29** | **ລວມ** | | | | |

| ເຕັກໂນໂລຍີ (Technology) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| **ລະບົບໄຟ, ແສງສະຫວ່າງ ແລະ ເຄື່ອງປັບອາກາດ** | | | | | | |
| ✓ | ✓ | **T01 – ລະບົບໄຟ**<br>• ມີຫ້ອງຄວບຄຸມລະບົບໄຟ.<br>• ມີແຜນຜັງສະແດງທີ່ຕັ້ງຂອງລະບົບໄຟ.<br>• ມີພະນັກງານປະຕິບັດໜ້າທີ່ໃນຊ່ວງຈັດງານ.<br>• ມີອຸປະກອນປ້ອງກັນຄວາມປອດໄພຈາກໄຟຟ້າຕາມກົດໝາຍພາຍໃນ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **T02 – ລະບົບແສງສະຫວ່າງ**<br>• ລະບົບແສງສະຫວ່າງຂອງຫ້ອງວາງສະແດງມີຄວາມເໝາະສົມ ແລະ ສາມາດຄວບຄຸມໄດ້.<br>• ເຄື່ອງມື ແລະ ອຸປະກອນໄຟຟ້າຕ້ອງໄດ້ມາດຕະຖານພາຍໃນ.<br>• ມີຫ້ອງຄວບຄຸມລະບົບແສງສະຫວ່າງ.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **T03 – ລະບົບເຄື່ອງປັບອາກາດຢູ່ໃນຫ້ອງວາງສະແດງ**<br>• ເຄື່ອງປັບອາກາດຕ້ອງມີຈຳນວນພຽງພໍກັບຂະໜາດຂອງຫ້ອງວາງສະແດງ.<br>• ການໄຫຼວຽນຂອງອາກາດ ແລະ ລະດັບອຸນຫະພູມສາມາດປັບໄດ້.<br>• ມີເອກະສານກວດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |

| ເຕັກໂນໂລຍີ (Technology) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| ✓ | ✓ | **T04 – ລະບົບລະບາຍອາກາດຢູ່ໃນຫ້ອງວາງສະແດງ**<br>• ມີລະບົບລະບາຍອາກາດທີ່ເໝາະສົມຕາມກົດໝາຍພາຍໃນປະເທດ.<br>• ມີລະບົບລະບາຍອາກາດທີ່ບໍ່ໄດ້ສ້າງຜົນກະທົບຕໍ່ຊຸມຊົນໃກ້ຄຽງ.<br>• ມີລະບົບຜະລິດອາກາດປະສົມກັບອາກາດຂ້າງນອກ.<br>• ມີເອກະສານກອດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **T05 – ລະບົບໄຟ ແລະ ແສງສະຫວ່າງຢູ່ພື້ນທີ່ກະກຽມຈັດງານ**<br>• ລະບົບແສງສະຫວ່າງຂອງພື້ນທີ່ກະກຽມຈັດງານມີຄວາມເໝາະສົມ ແລະ ສາມາດຄວບຄຸມໄດ້.<br>• ເຄື່ອງມື ແລະ ອຸປະກອນໄຟຟ້າຕ້ອງໄດ້ຕາມມາດຕະຖານພາຍໃນປະເທດ.<br>• ມີຫ້ອງຄວບຄຸມລະບົບໄຟ ແລະ ແສງສະຫວ່າງ.<br>• ມີເອກະສານກອດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **T06 – ເຄື່ອງປັ່ນໄຟຟ້າສຳຮອງ**<br>• ສາມາດດຳເນີນງານໄດ້ທັນທີຫຼັງຈາກໄຟດັບ (ພາຍໃນ 20 ວິນາທີ)<br>• ສາມາດປັ່ນໄຟໄດ້ຢ່າງຕໍ່ເນື່ອງຕ່ຳສຸດບໍ່ຫຼຸດ 2 ຊົ່ວໂມງ.<br>• ມີເອກະສານກອດກາ ຫຼື ສ້ອມແປງປະຈຳປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |

| ເຕັກໂນໂລຍີ (Technology) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| **ການບໍລິການອື່ນໆ** | | | | | | |
| ✓ | ✓ | **T07 – ການບໍລິການດ້ານການປະສານງານ ແລະ ເອກະສານ**<br>• ມີການບໍລິການກ໊ອບປີ້ເອກະສານ<br>• ມີການບໍລິການສະແກນເອກະສານ<br>• ມີການບໍລິການສິ່ງແຟັກ<br>• ມີສິ່ງອຳນວຍຄວາມສະດວກດ້ານອິນເຕີເນັດຄວາມໄວສູງຢູ່ໃນສະຖານທີ່ຈັດງານວາງສະແດງ.<br>• ມີສັນຍານວິທະຍຸສື່ສານທົ່ວສະຖານທີ່ຈັດງານ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **T08 – ສູນບໍລິການດ້ານທຸລະກິດ**<br>• ສະອາດ ແລະ ເປັນລະບຽບ.<br>• ມີເຄື່ອງປັບອາກາດ, ແສງສະຫວ່າງ ແລະ ຮູປັກສຽບ.<br>• ມີໂຕະ, ຕັ່ງ ຫຼື ບ່ອນເຮັດວຽກພຽງພໍ.<br>• ມີອິນເຕີເນັດຄວາມໄວສູງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| ✓ | ✓ | **T09 – ການນຳໃຊ້ລະບົບບໍລິຫານລູກຄ້າ**<br>• ລະບົບຖານຂໍ້ມູນລູກຄ້າ<br>• ລະບົບຮັບການຈອງ<br>• ລະບົບຮັບເອົາຄຳຈົ່ມວ່າ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ ແລະ ກວດເອກະສານ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **T10 – ລະບົບເຄື່ອງຂະຫຍາຍສຽງ**<br>• ສຽງດັງ ແລະ ແຈ້ງດີ<br>• ສຽງກະຈາຍໄປທົ່ວຫ້ອງວາງສະແດງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກວ່າ 2 ຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |

| ເຕັກໂນໂລຢີ (Technology) | | | | | | |
|---|---|---|---|---|---|---|
| ປະເພດ | | ຕົວຊີ້ວັດ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | • ສຽງກະຈາຍເປັນພາສາທ້ອງຖິ່ນ ແລະ ພາສາອັງກິດ.<br>• ສາມາດອອກອາກາດໄດ້ຫຼາຍບ່ອນ. | | | | |
| ✓ | ✓ | **T11 – ເວັບໄຊຂອງສະຖານທີ່ຈັດງານ**<br>• ມີເວັບໄຊທາງການຂອງສະຖານທີ່ຈັດງານວາງສະແດງ<br>• ມີຫຼັກຖານການປັບປຸງເວັບໄຊເປັນປະຈຳ.<br>• ເວັບໄຊມີຂໍ້ມູນທີ່ດີ ແລະ ກະທັດຮັດສຳລັບສະຖານທີ່ຈັດງານວາງສະແດງ, ຫ້ອງວາງສະແດງ ແລະ ໃຊ້ງ່າຍ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນເປັນລາຍລັກອັກສອນ | | |
| **11** | **11** | **ລວມ** | | | | |

| ການບໍລິການ (Service) | | | | | | |
|---|---|---|---|---|---|---|
| ປະເພດ | | ເງື່ອນໄຂຫລັກ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| **ການປະສານງານ ແລະ ຂອດການບໍລິການ** | | | | | | |
| ✓ | ✓ | **S01 – ການບໍລິການຮັບຈອງລ່ວງໜ້າ**<br>• ມີຂໍ້ມູນທາງອອນລາຍກ່ຽວກັບປະເພດ ແລະ ແຜນຜັງຂອງຫ້ອງວາງສະແດງທີ່ເຂົ້າໃຈງ່າຍ.<br>• ມີຂໍ້ມູນທາງອອນລາຍກ່ຽວກັບຫ້ອງວາງສະແດງທີ່ເຂົ້າໃຈງ່າຍ.<br>• ມີພະນັກງານຂາຍຄອຍຕອບຄຳຖາມລູກຄ້າ.<br>• ພະນັກງານມີຄວາມຮູ້ ແລະ ສາມາດໃຫ້ຄຳແນະນຳກ່ຽວກັບແຜນຜັງ ແລະ ແພັກເກັດຫ້ອງວາງສະແດງໄດ້ຕາມຄວາມຕ້ອງການຂອງລູກຄ້າ.<br>• ມີວິທີຊໍາລະເງິນຫລາຍວິທີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 4 ຂໍ້<br>1 ໄດ້ 3 ຂໍ້<br>0 ໄດ້ໜ້ອຍກວ່າ 3 ຂໍ້ | • ກວດສອບຕົວຈິງ ແລະ ສຳພາດ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ບົດລາຍງານການສຳພາດ | | |
| ✓ | ✓ | **S02 – ການບໍລິການສຳລັບຜູ້ຈັດງານ** | 3 ມີພະນັກງານຊ່ວຍວຽກຜູ້ຈັດງານ ແລະ ຮັບມືກັບບັນຫາຕ່າງໆ ຄືກັບຈຸດບໍລິການປະຕູດຽວໃນກໍລະນີເກີດເຫດສຸກເສີນ.<br>2 ຜູ້ຈັດງານສາມາດຕິດຕໍ່ 2-3 ຊ່ອງທາງໃນເວລາເກີດເຫດສຸກເສີນ.<br>1 ຜູ້ຈັດງານສາມາດຕິດຕໍ່ຫາຫລາຍພາກສ່ວນໃນເວລາເກີດເຫດສຸກເສີນ.<br>0 ຜູ້ຈັດງານບໍ່ຮູ້ຈະຕິດຕໍ່ຫາໃຜໃນເວລາເກີດເຫດສຸກເສີນ. | • ສຳພາດ<br>• ບົດລາຍງານການສຳພາດ | | |
| ✓ | ✓ | **S03 – ການປະເມີນການຈັດງານ ແລະ ການບໍລິການຂອງຜູ້ຊື້ ແລະ/ຫຼື ຜູ້ຈັດງານ** | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ສຳພາດ ແລະ ກວດເອກະສານ<br>• ບົດລາຍງານການສຳພາດ ແລະ ເອ | | |

| ການບໍລິການ (Service) | | | | | | |
|---|---|---|---|---|---|---|
| **ປະເພດ** | | **ເງື່ອນໄຂຫລັກ** | **ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ** | **ວິທີການປະເມີນ ແລະ ຫລັກຖານ** | **ຄະແນນທີ່ໄດ້** | **ຄຳຄິດເຫັນ** |
| **ຫ້ອງວາງສະແດງປະເພດ 1** | **ຫ້ອງວາງສະແດງປະເພດ 2** | | | | | |
| | | • ມີຊ່ອງທາງຮັບເອົາການຈົ່ມວ່າ ແລະ ຄຳຄິດເຫັນຈາກແຂກທີ່ເໝາະສົມ.<br>• ມີລະບົບຮັບເອົາການຈົ່ມວ່າ ແລະ ຄຳຄິດເຫັນຈາກແຂກ.<br>• ມີລະບົບສ້າງແຮງຈູງໃຈ/ໃຫ້ລາງວັນແກ່ພະນັກງານເພື່ອໃຫ້ໄດ້ມາດຕະຖານການບໍລິການທີ່ດີ. | | ກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **S04 – ການປະສານງານ ແລະ ການຮ່ວມມືກັບພາກສ່ວນພາຍນອກ (ເຊັ່ນ: ໂຮງໝໍ, ສະຖານີຕຳຫຼວດ ແລະ ສະຖານີດັບເພີງ)**<br>• ມີສູນປະສານງານ ແລະ ມີພະນັກງານບໍລິການຕະຫຼອດເວລາໃນຊ່ວງຈັດງານ.<br>• ມີບັນຊີລາຍຊື່ຜູ້ປະສານງານຕ່າງໆ ເຊັ່ນ: ເບີໂທຂອງພາກສ່ວນທີ່ກ່ຽວຂ້ອງຈາກພາຍນອກ.<br>• ມີລະບົບການປະສານງານກັບພາກສ່ວນພາຍນອກຕ່າງໆ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ສຳພາດ ແລະ ກວດເອກະສານ<br>• ບົດລາຍງານການສຳພາດ ແລະ ເອກະສານທີ່ກ່ຽວຂ້ອງ | | |
| **ພະນັກງານ** | | | | | | |
| ✓ | ✓ | **S05 – ບຸກຄະລິກກະພາບຂອງພະນັກງານ**<br>• ໃສ່ເຄື່ອງແບບທີ່ເໝາະສົມ.<br>• ພະນັກງານນຸ່ງຖືເປັນລະບຽບ ແລະ ສວຍງາມດີ.<br>• ພະນັກງານເປັນມິດທີ່ດີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດສອບຕົວຈິງ ແລະ ສຳພາດ<br>• ຮູບພາບ ແລະ/ຫຼື ຄຳຄິດເຫັນທີ່ເປັນລາຍລັກອັກສອນ ແລະ ບົດລາຍງານການສຳພາດ | | |
| ✓ | ✓ | **S06 – ຄວາມຮູ້ທົ່ວໄປ ແລະ ຄວາມເຂົ້າໃຈຂອງພະນັກງານສະຖານທີ່ຈັດງານ** | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກ່ວາ 2 ຂໍ້ | • ສຳພາດ<br>• ບົດລາຍງານການສຳພາດ | | |

| ການບໍລິການ (Service) | | | | | | | |
|---|---|---|---|---|---|---|---|
| ປະເພດ | | ເງື່ອນໄຂຫລັກ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | • ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບລາຍລະອຽດຂອງວຽກ ແລະ ໜ້າທີ່.<br>• ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບອຸດສາຫະກຳ ແລະ ກິດຈະກຳງານວາງສະແດງ.<br>• ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບສະຖານທີ່ ແລະ ການຈັດງານ.<br>• ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຄວາມເປັນມາ ແລະ ຄວາມຕ້ອງການຂອງຜູ້ເຂົ້າຮ່ວມງານ ແລະ ຜູ້ຈັດງານ. | | | | |
| ✓ | ✓ | **S07 – ທັກສະດ້ານພາສາຕ່າງປະເທດຂອງພະນັກງານ**<br>• ພະນັກງານສ່ວນຫລາຍສາມາດສື່ສານພາສາອັງກິດໄດ້<br>• ພະນັກງານຈຳນວນໜຶ່ງສາມາດສື່ສານພາສາທີ່ສາມໄດ້<br>• ມີການຝຶກອົບຮົມດ້ານພາສາໃຫ້ແກ່ພະນັກງານປະຈຳ ແລະ ຊົ່ວຄາວ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ສຳພາດ ແລະ ກວດເອກະສານ<br>• ບົດລາຍງານການສຳພາດ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **S08 – ການປະຕິບັດວຽກງານດ້ານຄຸນນະພາບຂອງການບໍລິການຂອງພະນັກງານ**<br>• ມີລະບົບການຮັບເອົາພະນັກງານທັງພະນັກງານປະຈຳ ແລະ ຊົ່ວຄາວ.<br>• ມີການແນະນຳ ແລະ ການຝຶກອົບຮົມໃຫ້ແກ່ພະນັກງານປະຈຳ ແລະ ຊົ່ວຄາວຕາມກົດໝາຍພາຍໃນປະເທດ.<br>• ມີລະບົບກວດສອບການຮັບເອົາພະນັກງານຊົ່ວຄາວໃໝ່. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 3 ຂໍ້<br>1 ໄດ້ 2 ຂໍ້<br>0 ໄດ້ໜ້ອຍກ່ວາ 2 ຂໍ້ | • ສຳພາດ ແລະ ກວດເອກະສານ<br>• ບົດລາຍງານການສຳພາດ ແລະ ເອກະສານທີ່ກ່ຽວຂ້ອງ | | |

| ການບໍລິການ (Service) | | | | | | | |
|---|---|---|---|---|---|---|---|
| ປະເພດ | | ເງື່ອນໄຂຫລັກ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| | | • ມີການຄຸ້ມຄອງການປະຕິບັດວຽກງານຂອງພະນັກງານປະຈຳ ແລະ ຊົ່ວຄາວຢ່າງເໝາະສົມ. | | | | |
| ✓ | ✓ | **S09 – ການຊົດເຊີຍ, ຜົນປະໂຫຍດ ແລະ ສະຫວັດດີການສຳລັບພະນັກງານ**<br>• ການຊົດເຊີຍ, ຜົນປະໂຫຍດ ແລະ ສະຫວັດດີການ ຕາມກົດໝາຍແຮງງານພາຍໃນປະເທດ.<br>• ພະນັກງານໄດ້ຮັບການກວດສຸຂະພາບປະຈຳປີ.<br>• ອີງຕາມກົດໝາຍແຮງງານພາຍໃນແມ່ນມີການສົ່ງເສີມໃຫ້ຈ້າງແຮງງານທ້ອງຖິ່ນໃຫ້ມີວຽກເຮັດ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ສຳພາດ ແລະ ກວດເອກະສານ<br>• ບົດລາຍງານການສຳພາດ ແລະ ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **S10 – ລະບຽບດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບ**<br>• ລະບຽບດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບໄດ້ລະບຸເປັນລາຍລັກອັກສອນຢ່າງດີ.<br>• ມີແຜນຈັດຕັ້ງປະຕິບັດງານລະບຽບດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບ.<br>• ມີການເຜີຍແຜ່ລະບຽບດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບຢູ່ທັງພາຍໃນ ແລະ ພາຍນອກອົງກາຈັດຕັ້ງ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ສຳພາດ ແລະ ກວດເອກະສານ<br>• ບົດລາຍງານການສຳພາດ ແລະ ເອກະສານທີ່ກ່ຽວຂ້ອງ | | |

| ການບໍລິການ (Service) | | | | | | |
|---|---|---|---|---|---|---|
| ປະເພດ | | ເງື່ອນໄຂຫລັກ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| ✓ | ✓ | **S11 – ວິທີຈັດຕັ້ງປະຕິບັດດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບ**<br>• ບົດບັນທຶກການປະຕິບັດດ້ານສຸຂະພາບ ແລະ ຄວາມປອດໄພໃນອາຊີບ.<br>• ບົດລາຍງານການປະຕິບັດວຽກງານ.<br>• ຕິດຕາມບົດລາຍງານການປະຕິບັດວຽກງານຢ່າງໜ້ອຍບໍ່ໃຫ້ຫຼຸດໜຶ່ງຄັ້ງຕໍ່ປີ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ສຳພາດ ແລະ ກວດເອກະສານ<br>• ບົດລາຍງານການສຳພາດ ແລະ ເອກະສານທີ່ກ່ຽວຂ້ອງ | | |
| **ການປົກປັກຮັກສາສິ່ງແວດລ້ອມ ແລະ ຊຸມຊົນ** | | | | | | |
| ✓ | ✓ | **S12 – ລະບຽບດ້ານສິ່ງແວດລ້ອມ (ເຊັ່ນ: ການປະຢັດພະລັງງານ, ພະລັງງານທາງເລືອກ ແລະ ການຈັດການຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ)**<br>• ມີລະບຽບດ້ານສິ່ງແວດລ້ອມຂຽນເປັນລາຍລັກອັກສອນ.<br>• ມີແຜນຈັດຕັ້ງປະຕິບັດລະບຽບດ້ານສິ່ງແວດລ້ອມ.<br>• ມີການເຜີຍແຜ່ລະບຽບດ້ານສິ່ງແວດລ້ອມຢູ່ທັງພາຍໃນ ແລະ ພາຍນອກອົງການ. | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ກວດເອກະສານ<br>• ເອກະສານທີ່ກ່ຽວຂ້ອງ | | |
| ✓ | ✓ | **S13 – ການຈັດຕັ້ງປະຕິບັດດ້ານສິ່ງແວດລ້ອມ**<br>• ບົດບັນທຶກການຈັດຕັ້ງປະຕິບັດດ້ານສິ່ງແວດລ້ອມ<br>• ບົດລາຍງານການປະຕິບັດວຽກງານ<br>• ຕິດຕາມບົດລາຍງານການປະຕິບັດວຽກຢ່າງໜ້ອຍບໍ່ໃຫ້ຫຼຸດນຶ່ງຄັ້ງຕໍ່ປີ | 3 ໄດ້ຄົບທຸກຂໍ້<br>2 ໄດ້ 2 ຂໍ້<br>1 ໄດ້ 1 ຂໍ້<br>0 ບໍ່ໄດ້ຈັກຂໍ້ | • ສຳພາດ ແລະ ກວດເອກະສານ<br>• ບົດລາຍງານການສຳພາດ ແລະ ເອກະສານທີ່ກ່ຽວຂ້ອງ | | |

| ການບໍລິການ (Service) | | | | | | |
|---|---|---|---|---|---|---|
| ປະເພດ | | ເງື່ອນໄຂຫລັກ | ເງື່ອນໄຂພື້ນຖານ ແລະ ການໃຫ້ຄະແນນ | ວິທີການປະເມີນ ແລະ ຫລັກຖານ | ຄະແນນທີ່ໄດ້ | ຄຳຄິດເຫັນ |
| ຫ້ອງວາງສະແດງປະເພດ 1 | ຫ້ອງວາງສະແດງປະເພດ 2 | | | | | |
| ✓ | ✓ | **S14 – ການໃຫ້ຄວາມສຳຄັນແກ່ຊຸມຊົນອ້ອມຂ້າງ** | 3 ມີກິດຈະກຳ ແລະ ນະໂຍບາຍສົ່ງເສີມຊຸມຊົນອ້ອມຂ້າງ.<br>2 ມີກິດຈະກຳ ຫລື ນະໂຍບາຍສົ່ງເສີມຊຸມຊົນອ້ອມຂ້າງ.<br>1 ມີກິດຈະກຳ ຫລື ນະໂຍບາຍສົ່ງເສີມຊຸມຊົນອ້ອມຂ້າງໜ້ອຍທີ່ສຸດ.<br>0 ບໍ່ມີກິດຈະກຳ ຫລື ນະໂຍບາຍສົ່ງເສີມຊຸມຊົນອ້ອມຂ້າງ. | • ສຳພາດ ແລະ ກວດເອກະສານ<br>• ບົດລາຍງານການສຳພາດ ແລະ ເອກະສານທີ່ກ່ຽວຂ້ອງ | | |
| **14** | **14** | **ລວມ** | | | | |
| **55** | **54** | **ລວມທັງໝົດ** | | | | |

***ໝາຍເຫດ:***

ຄະແນນເຕັມ ແລະ ຄະແນນຜ່ານສຳລັບຫ້ອງວາງສະແດງແຕ່ລະປະເພດ ດັ່ງລາຍລະອຽດລຸ່ມນີ້:

| ສະຖານທີ່ຈັດງານ | ຈຳນວນຕົວຊີ້ວັດທັງໝົດ | ຄະແນນເຕັມ | ຄະແນນຜ່ານ |
|---|---|---|---|
| ຫ້ອງວາງສະແດງປະເພດ 1 | 55 | 165 | 123.75 |
| ຫ້ອງວາງສະແດງປະເພດ 2 | 54 | 162 | 121.50 |

# ໝວດທີ 15

## ຂັ້ນຕອນການປະເມີນ

ຄະນະກຳມະການປະເມີນຜົນຂັ້ນສູນກາງທີ່ປະເມີນ ແລະ ກວດສອບສະຖານທີ່ຈັດງານຈະຕ້ອງປະຕິບັດຕາມຂັ້ນຕອນຕ່າງໆ ຄືດັ່ງຂ້າງລຸ່ມນີ້:

ຂັ້ນຕອນທີ 1: ການກວດສອບການຂໍສະໝັກ ແລະ ການກະກຽມການປະເມີນ

- ຫລັງຈາກໄດ້ຮັບການຂໍສະໝັກ (ໃບສະໝັກ ແລະ ບົດລາຍງານການປະເມີນຕົນເອງ) ແລ້ວ, ຄະນະກຳມະການດັ່ງກ່າວກໍ່ຈະຈັດກອງປະຊຸມເພື່ອພິຈາລະນາວ່າການຂໍສະໝັກນັ້ນໄດ້ຕາມມາດຖານທີ່ໄດ້ກຳນົດໄວ້ຫລືບໍ. ນອກຈາກນັ້ນ, ຄະນະກຳມະການດັ່ງກ່າວຍັງຈະກຳນົດວັນ ແລະ ເວລາເພື່ອດຳເນີນການປະເມີນຜົນ.
- ແນະນຳຜູ້ສະໝັກກ່ຽວກັບວັນ ແລະ ເວລາຂອງການປະເມີນຜົນນັ້ນເປັນລາຍລັກອັກສອນ ຊຶ່ງລົງນາມໂດຍປະທານຄະນະກຳມະການປະເມີນຜົນຂັ້ນສູນກາງ.
- ໃນກໍລະນີການຂໍສະໝັກນັ້ນມີການປະເມີນຜົນຄືນ, ການດຳເນີນການປັບປຸງກໍ່ຈະປະຕິບັດຢູ່ຂັ້ນຕອນນີ້ເລີຍ.

ຂັ້ນຕອນທີ 2: ການກວດສອບ

- ຢູ່ທີ່ສະຖານທີ່ຈັດງານ, ຄະນະກຳມະການເລີ່ມດຳເນີນຂັ້ນຕອນການປະເມີນໂດຍເນັ້ນໃສ່ການລົງກວດຕົວຈິງ ແລະ ຂັ້ນຕອນການປະເມີນຕ່າງໆ.
- ຄະນະກຳມະການຈະປຶກສາຫາລືການຂໍສະໝັກພ້ອມກັບລາຍລະອຽດທີ່ຈຳເປັນທັງໝົດຮ່ວມກັບຜູ້ສະໝັກ.
- ຄະນະກຳມະການຕ້ອງເຊັນໃບປະເມີນຂອງຄະນະກຳມະການປະເມີນຜົນຂັ້ນສູນກາງ ຕາມວັນ ແລະ ເວລາຂອງການການກວດສອບ.

ຂັ້ນຕອນທີ 3: ການປະເມີນຜົນ

- ຄະນະກຳມະການຈະດຳເນີນການປະເມີນຜົນໂດຍການສຳພາດ, ກວດສອບ ຫລື ກວດເບິ່ງເອກະສານດັ່ງທີ່ລະບຸໄວ້ຢູ່ໃນບົດແນະນຳການປະເມີນມາດຕະຖານສະຖານທີ່ຈັດງານອາຊຽນຂອງຄູ່ມືສະບັບນີ້. ຄະນະກຳມະການຄວນອ້າງອີງໃສ່ ແບບຟອມການກວດສອບ ຢູ່ໃນເອກະສານຊ້ອນທ້າຍຂອງຄູ່ມືສະບັບນີ້.
- ຄະນະກຳມະການຈຳເປັນຕ້ອງໄດ້ເກັບກຳຫລັກຖານຊຶ່ງອາດແມ່ນບົດບັກທຶກການສຳພາດ (ພ້ອມກັບຊື່ ແລະ ຕຳແໜ່ງຂອງຜູ້ຖືກສຳພາດ), ຮູບພາບ ຫລື ຄຳຄິດເຫັນເປັນລາຍລັກອັກສອນ ແລະ ເອກະສານທີ່ກ່ຽວຂ້ອງ.
- ຄະນະກຳມະການຈະໃຫ້ຄະແນນຕໍ່າສຸດແມ່ນ 0 (ສູນ) ແລະ ສູງສຸດແມ່ນ 3 (ສາມ).
- ຖ້າຫາກມີການປະເມີນຜົນຄືນ, ຄະນະກຳມະການກໍ່ຈະປະເມີນແຕ່ຕົວຊີ້ວັດທີ່ຍັງບໍ່ຜ່ານເທົ່ານັ້ນ.

ເມື່ອສິ້ນສຸດການປະເມີນຜົນຕ້ອງມີການປຶກສາຫາລືຜົນການປະເມີນຜົນດັ່ງກ່າວ ໂດຍສະເພາະແມ່ນຕົວຊີ້ວັດທີ່ໄດ້ຄະແນນຕໍ່າ. ຄະນະກຳມະການອາດສອບຖາມ ແລະ ປຶກສາຫາລືຮ່ວມກັບຜູ້ສະໝັກເລີຍເພື່ອຊີ້ແຈງບັນຫາຕ່າງໆ. ປະທານຂອງຄະນະກຳມະການປະເມີນຜົນຂັ້ນສູນກາງຕ້ອງສັງລວມການລົງກວດສອບຕົວຈິງ ແລະ ແຈ້ງວັນເວລາຂອງການຊີ້ແຈງຜົນໃຫ້ແກ່ຜູ້ສະໝັກ. ຢູ່ໃນຂັ້ນຕອນນີ້, ຫລັງຈາກຄະນະກຳມະການມີຄວາມເຫັນດີເປັນເອກະພາບກັນແລ້ວ, ປະທານກໍ່ຈະລາຍງານຜົນຂອງການກວດສອບສະຖານທີ່ຕົວຈິງ ແລະ ໃບດຳເນີນການປັບປຸງ ໃຫ້ແກ່ຜູ້ສະມັກຮັບຊາບ.

ຂັ້ນຕອນທີ 4: ບົດລາຍງານການປະເມີນຜົນ

- ພາຍຫລັງສິ້ນສຸດການປະເມີນຜົນແລ້ວ, ຄະນະກຳມະການຕ້ອງປະຊຸມເພື່ອສະຫລຸບຄະແນນ. ຖ້າຫາກຜູ້ສະໝັກໄດ້ຄະແນນຫລາຍກ່ວາ 75% ຂຶ້ນໄປ, ສະຖານທີ່ຈັດງານກໍ່ຈະໄດ້ຮັບການຢັ້ງຢືນ. ຖ້າຫາກບໍ່ໄດ້, ຜູ້ສະໝັກກໍ່ຈະໄດ້ຮັບໃບດຳເນີນການປັບປຸງ ແລະ ຄຳແນະນຳ. ຜູ້ສະໝັກຈະໄດ້ຮັບຄຳແນະນຳກ່ຽວກັບຂັ້ນຕອນຂອງການປະເມີນຄືນ.
- <u>ບົດລາຍງານການປະເມີນຜົນ</u> ປະກອບດ້ວຍ:
  - ໃບລົງຄະແນນຄັ້ງຫລ້າສຸດ ພ້ອມກັບຄະແນນສະເລ່ຍຂອງແຕ່ລະຕົວຊີ້ວັດຈາກສະມາຊິກທັງໝົດຂອງຄະນະກຳມະການປະເມີນຜົນຂັ້ນສູນກາງ.
  - ບົດບັນທຶກການທົບທວນຄືນ/ຄົ້ນທີ່ຖືກສຳພາດ/ຮູບພາບ.
  - ຂໍ້ມູນກ່ຽວກັບສິ່ງທີ່ໄດ້ຮັບການແກ້ໄຂ ແລະ ບັນຫາທີ່ພົບເຫັນ.
  - ສິ່ງທີ່ຕ້ອງໄດ້ປັບປຸງ (ຖ້າມີ)
  - ຂໍ້ຄວາມທີ່ເປັນຄວາມລັບຂອງບົດລາຍງານດັ່ງກ່າວ.
  - ສັງລວມບັນຫາທີ່ພົບເຫັນໃນເວລາກວດສອບຕົວຈິງ.

- ຢູ່ໃນຂັ້ນຕອນນີ້, ຄະນະກຳມະການຕ້ອງກະກຽມບົດລາຍງານການປະເມີນຜົນທີ່ຈະສົ່ງໄປໃຫ້ອົງການທ່ອງທ່ຽວພາກລັດ (ຂັ້ນສູນກາງ) ຫລື ທຽບເທົ່າ ເພື່ອຮັບຮອງເອົາຜູ້ສະໝັກທີ່ຜ່ານການປະເມີນເພື່ອສະເໜີຮັບເອົາລາງວັນມາດຕະຖານສະຖານທີ່ຈັດງານອາຊຽນ.
- ຫລັງຈາກສະຖານທີ່ດັ່ງກ່າວໄດ້ຮັບການຢັ້ງຢືນແລ້ວ, ຄະນະກຳມະການປະເມີນຜົນຂັ້ນສູນກາງອາດພິຈາລະນາດຳເນີນການກວດສອບແບບກະທັດຮັດ ເພື່ອຮັບປະກັນໃຫ້ສະຖານທີ່ທີ່ໄດ້ຮັບການຢັ້ງຢືນນັ້ນໄດ້ຕາມມາດຕະຖານສະຖານທີ່ຈັດງານອາຊຽນ.

# ບົດທີ 16

## ລະບຽບຂອງຄະນະກຳມະການປະເມີນຜົນຂັ້ນສູນກາງ

ຄະນະກຳມະການຕ້ອງປະຕິບັດຕາມລະບຽບດັ່ງຕໍ່ໄປນີ້:

- ຮັກສາຂໍ້ມູນທີ່ໄດ້ຮັບກ່ອນ, ລະຫວ່າງ ແລະ ຫລັງການປະເມີນຜົນເປັນຄວາມລັບ;
- ຫລີກລ່ຽງການສະແດງຄວາມຄິດເຫັນ ຫລື ຜົນການປະເມີນຜົນ;
- ຊອກຫາວິທີສ້າງສາຍພົວພັນດ້ານອາຊີບກັບພາກສ່ວນທີ່ກ່ຽວຂ້ອງເພື່ອສົ່ງເສີມການກະຈາຍຂໍ້ມູນ ແລະ ມີຄວາມເຄົາລົບນັບຖືຕະຫລອດການປະເມີນແຕ່ຕົ້ນຈົນຈົບ;
- ບໍ່ຮັບເອົາຂອງຕ້ອນ/ຂອງຂວັນຈາກພາກສ່ວນທີ່ຖືກປະເມີນ.

# ບົດທີ 17

## ການຕໍ່ ແລະ ຖອນໃບຢັ້ງຢືນ

17.1 ການຕໍ່ໃບຢັ້ງຢືນ

ໃນກໍລະນີສະຖານທີ່ຈັດງານທີ່ຜ່ານການປະເມີນແລ້ວ, ແຕ່ບໍ່ປະຕິບັດຕາມຂັ້ນຕອນການປະເມີນຜົນ ແລະ ການຢັ້ງຢືນສໍາລັບມາດຕະຖານສະຖານທີ່ຈັດງານອາຊຽນ ແລະ ບໍ່ປັບປຸງ ແລະ/ຫລື ບໍ່ປະຕິບັດຕາມລະບຽບພາຍໃນກໍານົດເວລາຂອງມາດຕະຖານສະຖານທີ່ຈັດງານອາຊຽນ, ຄະນະກໍາມະການກວດສອບ ຫລື ຄະນະກໍາມະການປະເມີນຂັ້ນສູນກາງຈະກະກຽມບົດລາຍງານເພື່ອສະເໜີຕໍ່ອົງການທ່ອງທ່ຽວພາກລັດ ເພື່ອພິຈາລະນາໂຈະການຕໍ່ໃບຢັ້ງຢືນ ແລະ ແຈ້ງໃຫ້ສະຖານທີ່ຈັດງານທີ່ໄດ້ຮັບລາງວັນນັ້ນຮັບຊາບເພື່ອດໍາເນີນການປັບປຸງ ແລະ ປ້ອງກັນ.

ສະຖານທີ່ຈັດງານທີ່ຜ່ານການປະເມີນນັ້ນຈະຕ້ອງດໍາເນີນການປັບປຸງ ແລະ ດໍາເນີນການປ້ອງກັນເພື່ອໃຫ້ມີປະສິດທິພາບ ແລະ ຄະນະກໍາມະການກວດສອບຈະປະເມີນຄືນພາຍໃນ 180 ວັນ. ຖ້າຫາກບໍ່ມີການປັບປຸງພາຍໃນ 180 ວັນ, ສະຖານທີ່ຈັດງານນັ້ນຈະຖືກຖອນໃບຢັ້ງຢືນດັ່ງກ່າວ.

17.2 ການຖອນໃບຢັ້ງຢືນ

ໃນກໍລະນີສະຖານທີ່ຈັດງານທີ່ໄດ້ຮັບລາງວັນນັ້ນ ບໍ່ຜ່ານ ໜຶ່ງ ຫລື ຫລາຍເງື່ອນໄຂ ເຊັ່ນ: 1) ບໍ່ປະຕິບັດຕາມລະບຽບທີ່ອົງການທ່ອງທ່ຽວພາກລັດໄດ້ກໍານົດໄວ້ ແລະ ມີຜົນກະທົບຕໍ່ການຢັ້ງຢືນນັ້ນ; 2) ບໍ່ປະຕິບັດຕາມຄວາມສໍາຄັນຂອງມາດຕະຖານສະຖານທີ່ຈັດງານທີ່ຖືກຮັບຮອງເອົາແລ້ວ; 3) ບໍ່ປະຕິບັດຕາມມາດຕະຖານສະຖານທີ່ຈັດງານອາຊຽນທີ່ຖືກຮັບຮອງແລ້ວຫລັງຈາກການຢັ້ງຢືນຖືກໂຈະສອງຄັ້ງພາຍໃນ 180 ວັນ; ແລະ 4) ມີການຮ້ອງທຸກວ່າຄະນະກໍາມະການປະເມີນຜົນຂັ້ນສູນກາງ ແລະ/ຫລື ອົງການທ່ອງທ່ຽວພາກລັດໄດ້ພິຈາລະນາວ່າອາດມີຄວາມເສຍຫາຍຕໍ່ການຢັ້ງຢືນ. ອົງການທ່ອງທ່ຽວພາກລັດຈະດໍາເນີນການຍົກເລີກການຮັບຮອງໄປຍັງປະເທດສະມາຊິກອາຊຽນ ເພື່ອຮັບຮອງເອົາຄັ້ງສຸດທ້າຍ ເພື່ອໃຫ້ສະຖານທີ່ຈັດງານນັ້ນສົ່ງໃບຢັ້ງຢືນ ແລະ ແຜ່ນປ້າຍລາງວັນໃຫ້ອົງການທ່ອງທ່ຽວພາກລັດໂດຍດ່ວນ.

# ບົດທີ 18

## ການອຸທອນ ແລະ ການຮ້ອງທຸກ

### 18.1 ການອຸທອນ

1) ຜູ້ສະໝັກມາດຕະຖານສະຖານທີ່ຈັດງານອາຊຽນສາມາດອຸທອນໄດ້ພາຍໃນ 30 ວັນ ຈາກວັນທີທີ່ອົງການທ່ອງທ່ຽວພາກລັດໄດ້ສົ່ງແຈ້ງການກ່ຽວກັບຜົນການຕັດສິນ. ການອຸທອນຈະຖືກສົ່ງໄປຫາອົງການທ່ອງທ່ຽວພາກລັດເປັນລາຍລັກອັກສອນ. ຖ້າຫາກການອຸທອນນັ້ນສົ່ງໄປທາງອີເມລ, ກໍ່ຈະມີການລົງທະບຽນ.
